# ພາກທີ V ຂ່າວທຳມະດາ ແຕ່ຂຽນບໍ່ງ່າຍ

## ບົດທີ 12
## ໃບແຈ້ງຂ່າວ



ໃຫ້ອະທິບາຍປະເດັນຍາກ ໂດຍກົງ

ມີຫລາຍຂ່າວຂຽນຈາກໃບຂ່າວທີ່ແຫລ່ງຂ່າວຕ່າງໆສົ່ງມາໃຫ້ ຊຶ່ງລວມມີອົງກອນຂອງລັດ, ອົງການທຸລະກິດ, ອົງການທີ່ບໍ່ຂຶ້ນກັບລັດຖະບານແລະອົງການຈັດຕັ້ງສາກົນ ເຊັ່ນ: ອົງການສະຫະປະຊາຊາດ.

ແຕ່ກໍລະນີສ່ວນໃຫຍ່ແລ້ວທ່ານບໍ່ຄວນເອົາແຕ່ໃບແຈ້ງຂ່າວມາຮຽບຮຽງຄືນໃໝ່ທໍ່ນັ້ນ, ແຕ່ຄວນພິຈາລະນາວ່າ ໃບແຈ້ງ ຂ່າວເປັນຈຸດເລີ່ມຕົ້ນໃນການຂຽນຂ່າວ. ແຫລ່ງຂ່າວເຮັດໃບແຈ້ງຂ່າວເພື່ອສົ່ງເສີມຕົນເອງ, ວຽກງານຂອງຕົນ, ກິດຈະກຳຫລືສິນຄ້າຂອງຕົນ. ສະນັ້ນ ຂໍ້ມູນມັກຈະບໍ່ຄົບຖ້ວນສົມບູນຫລືເປັນຂໍ້ມູນຈາກຝ່າຍດຽວ ອາດຈະຂຽນບໍ່ດີແລະບໍ່ມີລາຍລະອຽດທີ່ຈຳເປັນສຳລັບບົດຂ່າວ.

ນັກໜັງສືພິມທີ່ດີຕ້ອງໃຊ້ຄວາມຄິດສ້າງສັນແລະທັກສະການລາຍງານ ເພື່ອຜະລິດຂ່າວທີ່ດີຈາກໃບແຈ້ງຂ່າວທຳມະດາ ດ້ວຍການໃຫ້ພາບທີ່ສົມບູນແກ່ຜູ້ອ່ານ ແທນທີ່ຈະນຳໃບແຈ້ງຂ່າວຊຶ່ງມີມຸມມອງຝ່າຍດຽວມາຮຽບຮຽງ

ຄືນໃໝ່.

ຖ້າຫາກຈຳເປັນ ທ່ານຄວນຈະໂທລະສັບຕິດຕໍ່ຫາຜູ້ຜະລິດໃບແຈ້ງຂ່າວ ເພື່ອຂໍຄວາມກະຈ່າງແຈ້ງ ຫລືລາຍລະອຽດເພີ່ມເຕີມ. ໃຊ້ຄວາມຮູ້ຫລືການຄົ້ນຄວ້າຂອງທ່ານເອງ ເພື່ອປະກອບຄວາມເປັນມາ ແລະ ເນື້ອຫາສາລະໃສ່ໃນໃບແຈ້ງຂ່າວ. ຊອກເອົາຄວາມຄິດເຫັນຈາກບຸກຄົນທີ່ອາດຈະບໍ່ເຫັນດີນຳຂໍ້ມູນຢູ່ໃນໃບແຈ້ງຂ່າວ ຫລືໃຫ້ມຸມມອງທີ່ແຕກຕ່າງອອກໄປ. ຫາກມີຄົນທີ່ໄດ້ຮັບຜົນກະທົບຈາກເລື່ອງທີ່ກ່າວເຖິງ ກໍ່ໃຫ້ຂໍຄວາມຄິດເຫັນນຳເຂົາເຈົ້າເຊັ່ນດຽວກັນ.

ໃບແຈ້ງຂ່າວຈຳນວນຫລວງຫລາຍໃຊ້ພາສາລັດຖະການແລະວິຊາສະເພາະ. ຢ່າລືມຖາມຕົວເອງແລະບອກຜູ້ອ່ານວ່າ ເລື່ອງນີ້ມີຄວາມໝາຍຫຍັງແທ້ສຳລັບປະຊາຊົນ?

ຕໍ່ໄປນີ້ແມ່ນລາຍການກວດສອບທີ່ທ່ານຕ້ອງຄຳນຶງເຖິງ ເມື່ອບັນນາທິການເອົາໃບແຈ້ງຂ່າວມາວາງໄວ້ໜ້າໂຕະຂອງທ່ານ:

- ໃຫ້ຖາມຕົວເອງວ່າ ມີຂໍ້ມູນໃດໃໝ່ແລະໜ້າສົນໃຈບໍ່?
- ກວດສອບຂໍ້ມູນຈາກບ່ອນອື່ນວ່າ ຂ່າວນີ້ຖືກຕ້ອງບໍ່ ?
- ນຳໃຊ້ຄຳຖາມ 5W ແລະ H . ມີຫຍັງແດ່ຂາດຫາຍໄປ ?
- ຊອກຫາແງ່ມຸມທີ່ຄົນສົນໃຈ
- ຕິດຕໍ່ຄົນທີ່ມີຊື່ຢູ່ໃນໃບແຈ້ງຂ່າວ ເພື່ອຂໍຂໍ້ມູນເພີ່ມເຕີມ
- ສຳພາດແຫລ່ງຂ່າວອື່ນ ເພື່ອໃຫ້ໄດ້ຂໍ້ມູນຈາກ "ຝ່າຍອື່ນ"

ມາເບິ່ງໃບແຈ້ງຂ່າວສອງສາມອັນຕໍ່ໄປນີ້ ແລະພິຈາລະນາເບິ່ງວ່າຈະຈັດການກັບໃບແຈ້ງຂ່າວພວກນັ້ນແນວໃດ.

ໃບແຈ້ງຂ່າວຕໍ່ໄປນີ້ ແມ່ນເອົາມາຈາກສຳນັກຂ່າວຂອງອົງການສະຫະປະຊາຊາດ ຊຶ່ງມີຂໍ້ມູນດີໆແລະຖ້າປັບປຸງອີກຕື່ມໜ້ອຍໜຶ່ງ ທ່ານກໍ່ຈະສາມາດເຮັດໃຫ້ມັນກາຍເປັນຂ່າວທີ່ດີໄດ້.

ກ່ອນອື່ນ ທ່ານຄວນຈະຕິດຕໍ່ຫ້ອງການຂອງໂຄງການອາຫານໂລກ ເພື່ອຂໍຄວາມກະຈ່າງແຈ້ງ ກ່ອນຈະຂຽນຂ່າວໃຫ້ຊັດເຈນ ຕົວຢ່າງ: ປະຊາຊົນຈຳນວນ 40.000 ຄົນໄດ້ຮັບເຂົ້າແລ້ວບໍ່? ຖ້າຍັງບໍ່ໄດ້ຮັບ ຍາມໃດຈຶ່ງຈະໄດ້ຮັບ? ຄົນພວກນັ້ນຢູ່ແຂວງໃດ ? ຄົນສ່ວນໃຫຍ່ເປັນຊາວນາບໍ່ ? ຢູ່ໃນຂ່າວແຈກບອກວ່າມີຄົນຫລາຍກວ່າ 300.000 ຄົນ ໜີຈາກບ້ານເຮືອນຂອງຕົນແລະກຳລັງບໍ່ມີອາຫານຈະກິນ ສະນັ້ນ ມີຄົນຈຳນວນ 40.000 ຄົນ “ໄດ້ຮັບຜົນກະທົບຮ້າຍແຮງທີ່ສຸດແນວໃດ” ? ຢູ່ຫຍໍ້ໜ້າສຸດທ້າຍ “ການຊ່ວຍທົດແທນຄວາມເສຍຫາຍຈາກນ້ຳຖ້ວມໃນລະດັບຄົວເຮືອນ” ແລະ “ການຟື້ນຟູພື້ນຖານໂຄງລ່າງຢູ່ຊົນນະບົດໃນໄລຍະຍາວ” ໝາຍຄວາມວ່າແນວໃດ ? ທ່ານຈຳເປັນຕ້ອງຮູ້ ເພື່ອຈະໄດ້ອະທິບາຍໃຫ້ຜູ້ອ່ານເຂົ້າໃຈ.

ໃບແຈ້ງຂ່າວ

7 ກັນຍາ 2001

**ໂຄງການອາຫານໂລກຈັດສົ່ງອາຫານໃຫ້ຜູ້ປະສົບໄພນ້ຳຖ້ວມຈຳນວນ 40.000 ຄົນ ຢູ່ໃນກຳປູເຈຍ.**

**ພະນົມເປັນ** - ເນື່ອງຈາກລະດູນ້ຳຖ້ວມເທື່ອໃໝ່ເລີ່ມຄຸກຄາມກຳປູເຈຍ, ໂຄງການອາຫານໂລກຂອງອົງການສະຫະປະຊາຊາດຈຶ່ງຈັດສົ່ງອາຫານເປັນການດ່ວນໃຫ້ຜູ້ປະສົບໄພຈຳນວນ 40.000 ຄົນ ຊຶ່ງບ້ານເຮືອນແລະຜົນຜະລິດຂອງພວກເຂົາເຈົ້າຖືກນ້ຳພັດໄປ.

ເພື່ອແກ້ໄຂວິກິດໃນເບື້ອງຕົ້ນຢ່າງຮີບດ່ວນ ໂຄງການອາຫານໂລກກຳລັງຈັດສົ່ງເຂົ້າຈຳນວນ 500 ໂຕນ ໃຫ້ແກ່ປະຊາຊົນກຳປູເຈຍ ໂດຍຜູ້ປະສົບໄພແຕ່ລະຄົນຈະມີອາຫານລ້ຽງໂຕເອງໄດ້ໜຶ່ງເດືອນ. ພະນັກງານລັດທີ່ຮັບຜິດຊອບການບັນເທົາທຸກຈາກໄພພິບັດກ່າວໂດຍລະບຸວ່າ ຜູ້ທີ່ໄດ້ຮັບການຊ່ວຍເຫລືອແມ່ນຜູ້ປະສົບໄພນ້ຳຖ້ວມທີ່ຮ້າຍແຮງທີ່ສຸດ. ພ້ອມດຽວກັນນັ້ນ ໂຄງການອາຫານໂລກກຳລັງປະເມີນຄວາມຕ້ອງການອາຫານຢູ່ໃນເຂດນ້ຳຖ້ວມ ເພື່ອໃຫ້ການຊ່ວຍເຫລືອໄດ້ຫລາຍຂຶ້ນ ຖ້າຫາກຈຳເປັນ.

"ໃນໄລຍະນີ້ຂອງປີ ພວກເຮົາຕ້ອງຕຽມຕົວຮັບມືກັບນ້ຳຖ້ວມເທື່ອໃໝ່" ຣິເບັກກາ ຮັນເຊັນ ຜູ້ອຳນວຍການໂຄງການອາຫານໂລກປະຈຳກຳປູເຈຍລະບຸວ່າ ເຂົ້າຈຳນວນ 500 ໂຕນ ແມ່ນມາຈາກກອງທຶນສຳລັບແຜນການສຸກເສີນ ຊຶ່ງອະນຸຍາດໃຫ້ໂຄງການອາຫານໂລກລົງມືຊ່ວຍເຫລືອບັນເທົາທຸກດ້ານມະນຸດສະທຳພາຍໃນ 24 ຊົ່ວໂມງ ເມື່ອເກີດໄພພິບັດຂຶ້ນ.

ຮັນເຊັນເວົ້າຕື່ມວ່າ: "ພວກເຮົາເປັນຫ່ວງ ເພາະວ່າປະຊາຊົນຜູ້ທີ່ຕ້ອງການຄວາມຊ່ວຍເຫລືອຫາກໍ່ຟື້ນຟູຖິ່ນຖານບ້ານຊ່ອງຂອງຕົນຄືນໃໝ່ ຫລັງຈາກທີ່ເກີດນ້ຳຖ້ວມຄັ້ງໃຫຍ່ຢູ່ສາມຫລ່ຽມແມ່ນ້ຳຂອງປີກາຍນີ້. ຊີວິດຂອງພວກເຂົາເຈົ້າຍັງຢູ່ໃນຄວາມຫຍຸ້ງຍາກຢູ່ ຈຶ່ງເປັນເລື່ອງຍາກທີ່ຈະຮັບມືກັບຄວາມຕື່ນຕົກໃຈເທື່ອໃໝ່ນີ້ໄດ້."

ປະຊາຊົນຫລາຍກວ່າ300.000 ຄົນຢູ່ພາກຕາເວັນອອກແລະພາກໃຕ້ຂອງກຳປູເຈຍຕ້ອງອົບພະຍົບອອກຈາກບ້ານເຮືອນແລະກຳລັງຂາດແຄນອາຫານ.

*ພະນັກງານບັນເທົາທຸກຂອງລັດຖະບານປະເມີນວ່າ ມີປະຊາຊົນ 1, 2 ລ້ານຄົນໄດ້ຮັບຜົນກະທົບບໍ່ທາງໃດກໍ່ທາງໜຶ່ງຈາກນ້ຳຖ້ວມຄັ້ງນີ້.*

*ປີກາຍນີ້ເກີດນ້ຳຖ້ວມຄັ້ງໃຫຍ່ໃນປະຫວັດສາດ ຢູ່ເຂດສາມຫລ່ຽມແມ່ນ້ຳຂອງ ຊຶ່ງທຳລາຍບ້ານເຮືອນແລະທົ່ງນາຂອງປະຊາຊົນ ຫລາຍກ່ວາ 200.000 ເຮັກຕາ. ຖືວ່າເປັນໄພທຳມະຊາດທີ່ຮ້າຍແຮງທີ່ສຸດໃນຮອບ 70 ປີ, ມີຄົນເສຍຊີວິດເຖິງ 347 ຄົນ, ໃນຈຳນວນນີ້ມີເດັກນ້ອຍ 80 ເປີເຊັນ.*

*ປີນີ້ ຢູ່ກຳປູເຈຍເກີດທັງໄພແລ້ງແລະນ້ຳຖ້ວມຢູ່ເຂດຕ່າງໆ. ໄພພິບັດເຫລົ່ານີ້ທຳລາຍການຮັບປະກັນທາງດ້ານສະບຽງອາຫານຂອງປະເທດຢ່າງຮຸນແຮງ ຊຶ່ງກຳປູເຈຍແມ່ນໜຶ່ງໃນບັນດາປະເທດທີ່ຍາກຈົນທີ່ສຸດໃນອາຊີ.*

*ໂຄງການອາຫານໂລກກຳລັງສະຫລຸບການປະຕິບັດງານສຸກເສີນຢູ່ໃນກຳປູເຈຍໄລຍະ 1 ປີ ເປັນມູນຄ່າ 9 ລ້ານໂດລາອາເມຣິກາ ຊຶ່ງໃນງວດທຳອິດຂອງການດຳເນີນງານ ສາມາດສົ່ງອາຫານ ເພື່ອບັນເທົາທຸກຢ່າງຮີບດ່ວນແກ່ຜູ້ປະສົບໄພຈຳນວນ 500.000 ຄົນ ແລະອີກ 250.000 ຄົນໃນງວດທີສອງ ຈະໄດ້ຮັບການຊ່ວຍເຫລືອເປັນອາຫານ ເພື່ອທົດແທນຄວາມເສຍຫາຍຈາກໄພນ້ຳຖ້ວມໃນລະດັບຄົວເຮືອນ. ສ່ວນໃນງວດທີສາມ ຊຶ່ງຄາດວ່າຢູ່ໃນທ້າຍເດືອນນີ້ ຈະມີຜູ້ໄດ້ຮັບອາຫານຈຳນວນ 115.000 ຄົນ ເພື່ອຟື້ນຟູພື້ນຖານໂຄງລ່າງຢູ່ຊົນນະບົດໃນໄລຍະຍາວ.*

ລາຍລະອຽດເພີ່ມເຕີມບາງຢ່າງອາດຈະເຮັດໃຫ້ເລື່ອງໜັກແໜ້ນຂຶ້ນ. ຍາມໃດອາດຈະເກີດນ້ຳຖ້ວມເທື່ອໃໝ່? ຝົນເລີ່ມຕົກແລ້ວບໍ່?

ໃບແຈ້ງຂ່າວມີຄຳເວົ້າອ້າງອີງທີ່ມີນ້ຳໜັກຂອງຮັນເຊັນ ຊຶ່ງທ່ານສາມາດນຳມາໃສ່ໃນບົດຂ່າວໄດ້. ທ່ານອາດຈະຂໍໃຫ້ນາງຂະຫຍາຍຄວາມແລະຂໍລາຍລະອຽດທີ່ກະທົບຄວາມຮູ້ສຶກໄດ້ຫລາຍຂຶ້ນ ຕົວຢ່າງ : ນາງໄດ້ໄປຢ້ຽມຢາມເຂດທີ່ປະຊາຊົນຫາກໍ່ປຸກເຮືອນໃໝ່ແດ່ບໍ່ ? ນາງເຫັນຫຍັງແດ່ ? ເມື່ອເຂົ້າທີ່ສົ່ງມາຊ່ວຍເຫລືອສຳລັບ 1 ເດືອນໝົດແລ້ວ ປະຊາຊົນເຫລົ່ານີ້ຈະພາກັນເຮັດແນວໃດ ? ມີວິທີ

ໃດແດ່ທີ່ຈະຊ່ວຍເຂົາເຈົ້າບໍ່ໃຫ້ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມໃນອະນາຄົດ ? ຫລືອົງການສະຫະປະຊາຊາດຊ່ວຍເຫລືອໄດ້ແຕ່ສະບຽງອາຫານທໍ່ນັ້ນບໍ່ ?



*ເຂົ້າຈະພໍກິນບໍ່ສຳລັບຊາວບ້ານນີ້ ?*

ທ່ານສາມາດໂທລະສັບຖາມອົງການທີ່ບໍ່ຂຶ້ນກັບລັດຖະບານ ຫລື ພະນັກງານ (ຕາມທີ່ລະບຸຢູ່ໃນໃບຂ່າວ) ຜູ້ຊຶ່ງເຮັດວຽກຊ່ວຍເຫລືອຜູ້ປະສົບໄພຮ້າຍແຮງເທື່ອນີ້ວ່າ ເຂົາເຈົ້າເຫັນຫຍັງແດ່ ເວລາໄປຢ້ຽມຢາມຜູ້ປະສົບໄພ. ເຂົາເຈົ້າຄິດແນວໃດຕໍ່ໂຄງການອາຫານໂລກທີ່ເຂົ້າມາຊ່ວຍກູ້ວິກິດເທື່ອນີ້ ? ການຊ່ວຍເຫລືອພຽງພໍແລະເໝາະສົມບໍ່ ? ໃຫ້ຈື່ໄວ້ວ່າໃບແຈ້ງຂ່າວເປັນຂ່າວຂອງໂຄງການອາຫານໂລກ ຊຶ່ງຄືກັນກັບອົງການອື່ນໆ ທີ່ມີມຸມມອງແລະຈະເວົ້າແຕ່ເລື່ອງດີໆຂອງຕົນເອງ. ໃນຖານະທີ່ທ່ານເປັນນັກໜັງສືພິມ ໜ້າທີ່ຂອງທ່ານຄືໃຫ້ແງ່ມຸມອື່ນໆແກ່ຜູ້ອ່ານນຳອີກ.

ຂ່າວຂອງທ່ານຈະໜ້າສົນໃຈຫລາຍຂຶ້ນຢ່າງແນ່ນອນຖ້າຫາກທ່ານໄປໂອ້ລົມກັບຜູ້ປະສົບໄພບາງຄົນໃນຈຳນວນ 40.000 ຄົນ ແລ້ວພັນລະນາຄວາມຮູ້ສຶກແລະສະພາບການດຳລົງຊີວິດຂອງເຂົາເຈົ້າ. ເຂົາເຈົ້າຢູ່ລອດໄດ້ແນວໃດ ? ເຂົາເຈົ້າຮູ້ສຶກແນວໃດ ຖ້າຫາກມີນ້ຳຖ້ວມອີກຕື່ມ ? ຫລັງຈາກນັ້ນ ທ່ານອາດເລີ່ມຕົ້ນຂ່າວໂດຍການພັນລະນາກ່ຽວກັບຄົນທີ່ທຸກຍາກແທ້ໆ ຊຶ່ງຜູ້ອ່ານອາດຈະເຫັນອົກເຫັນໃຈ. ວິທີນີ້ຈະມີນ້ຳໜັກຫລາຍກວ່າການຂຶ້ນຕົ້ນຂ່າວດ້ວຍການປະກາດກ່ຽວກັບການແຈກຢາຍເຂົ້າ.

ບາງທີທ່ານອາດຈະບໍ່ມີເວລາໄປຢ້ຽມຢາມບໍລິເວນທີ່ເກີດໄພນ້ຳຖ້ວມ ຫລືທ່ານຮູ້ສຶກວ່າ ຄວນຈະຂຽນກ່ຽວກັບການດຳເນີນງານຂອງໂຄງການອາຫານໂລກໂດຍໄວ ເພາະວ່າໜັງສືພິມສະບັບອື່ນໆກຳລັງຈະຂຽນແນວນັ້ນຢູ່. ໃນກໍລະນີນີ້ ໃຫ້ໂທລະສັບລົມກັບແຫລ່ງຂ່າວແລະຂຽນໄປກ່ອນເທົ່າທີ່ທ່ານມີຂໍ້ມູນ ແລ້ວຈຶ່ງວາງແຜນເດີນທາງໄປບໍລິເວນທີ່ເກີດໄພນ້ຳຖ້ວມຕາມຫລັງ ເພື່ອຂຽນຂ່າວລັກສະນະສາລະຄະດີ ດ້ວຍການພັນລະນາແລະໃຊ້ຄຳເວົ້າອ້າງອີງຈາກສະຖານທີ່ໄດ້ຢ່າງໜັກແໜ້ນ.

ຕໍ່ໄປນີ້ ແມ່ນໃບແຈ້ງຂ່າວອີກອັນໜຶ່ງຈາກອົງການທ່ອງທ່ຽວແຫ່ງປະເທດໄທ ຊຶ່ງແມ່ນອົງການທ່ອງທ່ຽວຂອງລັດຖະບານໄທ:

> ***ໃບແຈ້ງຂ່າວ***
>
> ***ຄົນຕ່າງປະເທດຫ້າລ້ານຄົນມາຢ້ຽມຢາມປະເທດໄທໃນຫົກເດືອນຕົ້ນປີນີ້***
>
> *ກຸງເທບ, ປະເທດໄທ, ວັນທີ 11 ກັນຍາ 2001 - ຄົນຕ່າງປະເທດທີ່ມາຢ້ຽມຢາມປະເທດໄທ ໃນລະຫວ່າງເດືອນມັງກອນ - ມິຖຸນາ 2001 ມີທັງໝົດ 5.003.691 ຄົນ ຊຶ່ງເພີ່ມຂຶ້ນເປັນ 7, 86 ເປີເຊັນ ໃນເວລາດຽວກັນນີ້ຂອງປີ 2000.*
>
> *ນັກທ່ອງທ່ຽວມາຈາກຕະຫລາດສຳຄັນ ເຊັ່ນ: ມາຈາກອາຊີຕາເວັນອອກ (2.986.703 ຄົນ), ທະວີບເອີຣົບ (1.175.436 ຄົນ), ທະວີບອາເມຣິກາ (326.787 ຄົນ), ໂອກຊີອານີ (200.407 ຄົນ), ອາຊີໃຕ້ (172.247 ຄົນ), ຕາເວັນອອກກາງ (99.581 ຄົນ)ແລະທະວີບອາຟຣິກາ (42.530 ຄົນ).*
>
> *ຕົວເລກທົ່ວທຸກຂົງເຂດເພີ່ມຂຶ້ນຫລາຍ. ນັກທ່ອງທ່ຽວມາຈາກອາຊີຕາເວັນອອກມີເພີ່ມຂຶ້ນ 6, 09 ເປີເຊັນ, ຈາກເອີຣົບ 8, 58 ເປີເຊັນ, ທະວີບອາເມຣິກາ*

12, 96 ເປີເຊັນ, ໂອກຊີອານີ 16, 58 ເປີເຊັນ, ອາຊີໃຕ້ 6, 38 ເປີເຊັນ, ຕາເວັນອອກກາງ 22, 52 ເປີເຊັນ ແລະທະວີບອາຟຣິກາ 15, 02 ເປີເຊັນ.

ທ່ານ ພະຣາເດັດ ພະຍັກວິຊຽນ ຜູ້ວ່າການອົງການທ່ອງທ່ຽວແຫ່ງປະເທດໄທອອກຄວາມເຫັນວ່າ : "ພວກເຮົາມີຄວາມຍິນດີຢ່າງຍິ່ງ ທີ່ເຫັນຄວາມເຕີບໂຕຂອງຕະຫລາດສຳຄັນຂອງພວກເຮົາ. ຂອບໃຈນຳການສະໜັບສະໜູນຢ່າງເຕັມທີ່ຂອງລັດແລະການຄວາມຮ່ວມມືຈາກຂະແໜງການທີ່ກ່ຽວຂ້ອງ ຂອງພາກລັດແລະເອກະຊົນ."

ນັກທ່ອງທ່ຽວຍີ່ປຸ່ນແມ່ນຕະຫລາດໃຫຍ່ທີ່ສຸດ ກວມເອົາອັດຕາ 12, 23 ເປີເຊັນ (ຫລື 611.902 ຄົນ)ຂອງຄົນຕ່າງປະເທດທັງໝົດ ທີ່ມາຢ້ຽມຢາມປະເທດໄທໃນລະຫວ່າງນີ້; ຮອງລົງມາແມ່ນມາເລເຊຍ (10, 27 ເປີເຊັນ ຫລື 514.122 ຄົນ); ຄົນຈີນໄຕ້ຫວັນ (7,44 ເປີເຊັນ ຫລື 372.070 ຄົນ); ຄົນຈີນແຜ່ນດິນໃຫຍ່ (6,77 ເປີເຊັນ ຫລື 338.578 ຄົນ)ແລະຄົນສິງກະໂປ(6,53 ເປີເຊັນ ຫລື 326.757 ຄົນ).

ໃນລະຫວ່າງເດືອນມັງກອນຫາເດືອນມິຖຸນາ ປີ 2001 ກໍ່ເຊັ່ນກັນ: ມີແມ່ຍິງເດີນທາງມາຢ້ຽມຢາມເພີ່ມຂຶ້ນ 8,6 ເປີເຊັນ (ຮອດ 2.005.957 ຄົນ) ຫລາຍກວ່າຈຳນວນຜູ້ຊາຍທີ່ມາຢ້ຽມຢາມ ຊຶ່ງເພີ່ມຂຶ້ນ 7,37 ເປີເຊັນ (2.997.734 ຄົນ).

ຜູ້ທີ່ເດີນທາງມາຢ້ຽມຢາມຊ້ຳອີກ ມີຈຳນວນທັງໝົດ 52,94 ເປີເຊັນ(ຫລື 2.648.967 ຄົນ)ຂອງສ່ວນແບ່ງຕະຫລາດແລະຂະຫຍາຍຕົວດີຂຶ້ນ 20.84 ເປີເຊັນ ສ່ວນຈຳນວນຄົນທີ່ມາຢ້ຽມຢາມປະເທດໄທເປັນເທື່ອທຳອິດຫລຸດລົງໜ້ອຍດຽວ 3,77 ເປີເຊັນ (2.354.724). ຜູ້ທີ່ເດີນທາງເຂົ້າມາໂດຍລຳພັງ (FITs) ມີສ່ວນແບ່ງຕະຫລາດເພີ່ມຂຶ້ນ ໂດຍມີຈຳນວນ 58,72 ເປີເຊັນ (ຫລື 2.937.971 ຄົນ) ຂອງນັກທ່ອງທ່ຽວທັງໝົດແລະເພີ່ມຂຶ້ນ 13,30 ເປີເຊັນ ຫລາຍກວ່າໃນປີ 2000 ຫລືຫລາຍກວ່ານັກທ່ອງທ່ຽວທີ່ມາທ່ຽວເປັນກຸ່ມ ຊຶ່ງມີຈຳນວນເພີ່ມຂຶ້ນ 0,96 ເປີເຊັນ (2.065.720 ຄົນ).

ນັກເດີນທາງທີ່ເປັນນັກທຸລະກິດແລະຜູ້ແທນເຂົ້າຮ່ວມກອງປະຊຸມຕ່າງໆມີເພີ່ມຂຶ້ນໜ້ອຍດຽວຄື 3,69 ເປີເຊັນ ເປັນຈຳນວນຄົນ 441.339 ຄົນ ແລະ 0,99 ເປີເຊັນ ເປັນຈຳນວນ 45.328 ຄົນຕາມລຳດັບກັນ.

ດ້ານອາຍຸ ຄົນສ່ວນໃຫຍ່ທີ່ມາຢ້ຽມຢາມປະເທດໄທມີອາຍຸລະຫວ່າງ 25 ຫາ 34 ປີ (ມີ 26,73 ເປີເຊັນ ຫລື 1.337.458 ຄົນຂອງຈຳນວນຜູ້ມາຢ້ຽມຢາມທັງໝົດ) ແລະອາຍຸລະຫວ່າງ 35 ຫາ 44 ປີ (24,06 ເປີເຊັນ ຫລື 1.203.957 ຄົນ).

ເດັກນ້ອຍອາຍຸຕ່ຳກວ່າ 15 ປີ ແລະຜູ້ສູງອາຍຸຊຶ່ງມີອາຍຸ 65 ປີ ຫລືຫລາຍກວ່າ ກໍມີເພີ່ມຂຶ້ນ 6,73 ເປີເຊັນ ແລະ 6,55 ເປີເຊັນ ຕາມລຳດັບກັນ ສະແດງໃຫ້ເຫັນເຖິງຄວາມເຂັ້ມແຂງຂອງປະເທດໄທ ໃນການເປັນຈຸດໝາຍປາຍທາງສຳລັບຄອບຄົວແລະຜູ້ມີອາຍຸສູງ. ນັກເດີນທາງທີ່ເປັນນັກສຶກສາເພີ່ມຂຶ້ນຢ່າງຫລວງຫລາຍ ເຖິງ 11,08 ເປີເຊັນ ສະແດງໃຫ້ເຫັນໂສມໜ້າຂອງປະເທດທີ່ປ່ຽນແປງໄປໃນທາງດີ.

ໄລຍະທີ່ພັກເຊົາຢູ່ໃນປະເທດໄທໂດຍສະເລ່ຍແລ້ວ ມີເພີ່ມຂຶ້ນຈາກ 8 ມື້ ລະຫວ່າງເດືອນມັງກອນຫາມິຖຸນາ ປີ 2000 ເປັນ 8,11 ມື້ ລະຫວ່າງເດືອນມັງກອນຫາມິຖຸນາ ປີ 2001 ຊຶ່ງກໍ່ເປັນໄປຕາມທິດທາງຂອງການທ່ອງທ່ຽວແຫ່ງປະເທດໄທ ທີ່ພະຍາຍາມສົ່ງເສີມໃຫ້ນັກທ່ອງທ່ຽວມາພັກເຊົາຢູ່ໃນປະເທດໄທດົນນານກວ່າເກົ່າ.

ສ່ວນການເດີນທາງອອກນອກປະເທດຂອງຄົນໄທມີຈຳນວນທັງໝົດ 1.072.479 ຄົນ ລະຫວ່າງເດືອນມັງກອນຫາມິຖຸນາ ປີ 2001 ແມ່ນເພີ່ມຂຶ້ນ 9,03 ເປີເຊັນ ເມື່ອປຽບທຽບກັບໄລຍະເວລາດຽວກັນນີ້ຂອງປີ 2000.

ການທ່ອງທ່ຽວແຫ່ງປະເທດໄທຄາດວ່າ ໃນປີ 2001 ຈະມີຜູ້ເດີນທາງມາຢ້ຽມຢາມປະເທດໄທທັງໝົດປະມານ 10,3 ລ້ານຄົນ ເພີ່ມຂຶ້ນປະມານ 8,32 ເປີເຊັນ ແລະຈະນຳລາຍໄດ້ເຂົ້າປະເທດປະມານ 320.124 ພັນລ້ານບາດ.

ຕິດຕໍ່ ຝ່າຍຂ່າວຕ່າງປະເທດ
ກອງປະຊາສຳພັນ

ໂທລະສັບ: 662 694-1222 ຕໍ່ 1540-3
ໂທລະສານ: 662 694-1325
ອີເມລ໌ :prdiv3@tat.or.th

ໃບແຈ້ງຂ່າວນີ້ບໍ່ແຕກຕ່າງກັບຕາຕະລາງສະຖິຕິປານໃດ ແຕ່ຖ້າຫາກເບິ່ງດີໆ ແລະໂທລະສັບຕິດຕໍ່ຖາມສອງສາມເທື່ອ ທ່ານກໍຈະຂຽນຂ່າວດີໄດ້ຂ່າວໜຶ່ງ.

ປະການທຳອິດ ໃບແຈ້ງຂ່າວບໍ່ໄດ້ຕອບຄຳຖາມພື້ນຖານຢູ່ໃນປະໂຫຍກທຳອິດວ່າ: ເປັນຫຍັງຈຳນວນຄົນຕ່າງປະເທດທີ່ມາຢ້ຽມຢາມປະເທດໄທຈຶ່ງເພີ່ມຂຶ້ນ ໂດຍສະເພາະຄົນຈາກພາກຕາເວັນອອກກາງ "ໂອກຊີອານີ" ແລະທະວີບອາຟຣິກາ. ເຈົ້າໜ້າທີ່ການທ່ອງທ່ຽວແຫ່ງປະເທດໄທຄວນຕອບຄຳຖາມເຫລົ່ານີ້ໄດ້.

ທ່ານຄົງຢາກຖາມວ່າ ຕົວເລກແຕ່ເດືອນມັງກອນຫາມິຖຸນາ ປີ 2001 ເມື່ອສົມທຽບກັບໄລຍະເວລາດຽວກັນນີ້ຂອງປີອື່ນໆແລ້ວເປັນແນວໃດ ບໍ່ພຽງສະເພາະແຕ່ປີ 2000 ທໍ່ນັ້ນ. ອັນນີ້ແມ່ນຕົວເລກສູງສຸດເທົ່າທີ່ຮວບຮວມໄວ້ບໍ່ ? ຫລືແມ່ນຕົວເລກຕ່ຳກວ່າໃນປີ 1996 ກ່ອນເລີ່ມເກີດວິກິດດ້ານເສດຖະກິດຢູ່ໃນອາຊີບໍ່ ? ຈຳນວນນັກທ່ອງທ່ຽວທີ່ມາຢ້ຽມຢາມມີຈັກເປີເຊັນ ເມື່ອສົມທຽບກັບນັກທຸລະກິດແລະຄົນອື່ນໆທີ່ມາຢ້ຽມຢາມ ? "ທະວີບອາເມຣິກາ" ແລະ "ໂອກຊີອານີ" ໝາຍຄວາມວ່າແນວໃດ ? ຄຳເວົ້າເຫລົ່ານີ້ ບໍ່ແມ່ນຄຳເວົ້າທີ່ຄົນສ່ວນໃຫຍ່ໃຊ້ກັນ. ຄຳເວົ້າຂອງຜູ້ວ່າການທ່ອງທ່ຽວທີ່ຍົກເອົາມາອ້າງອີງບໍ່ເປັນໜ້າສົນໃຈປານໃດ ສ່ວນໃຫຍ່



*ຢ່າເບິ່ງແຕ່ຈຳນວນນັກທ່ອງທ່ຽວ*

ແລ້ວແມ່ນສະແດງຄວາມຊົມເຊີຍລັດຖະບານ ສະນັ້ນ ທ່ານຕ້ອງຊອກຫາຄຳເວົ້າອ້າງອີງດີໆຈາກແຫລ່ງຂ່າວທີ່ ໄຫລະສັບໄປຂໍຂໍ້ມູນ.

ຕອນທ້າຍຂອງໃບແຈ້ງຂ່າວມີບາງຢ່າງທີ່ໜ້າສົນ ໃຈຄື: ມີເດັກນ້ອຍ, ຜູ້ສູງອາຍຸແລະນັກສຶກສາທີ່ມາຢ້ຽມ ຢາມປະເທດໄທຫລາຍຂຶ້ນ. ອັນນີ້ສະແດງໃຫ້ເຫັນວ່າ "ໂສມໜ້າຂອງປະເທດໄທປ່ຽນແປງໄປໃນທາງດີ." ທ່ານ ອາດຈະຮູ້ວ່າ ປະເທດໄທມີຊື່ສຽງເລື່ອງໂສເພນີແລະຢາ ເສບຕິດ ຊຶ່ງອາດຈະດຶງດູດນັກທ່ອງທ່ຽວທີ່ເປັນຜູ້ຊາຍ. ທ່ານຄົງຢາກຖາມພະນັກງານອົງການທ່ອງທ່ຽວວ່າ ເຂົາ ເຈົ້າກຳລັງອ້າງອີງເຖິງເລື່ອງນີ້ບໍ່ ຖ້າຫາກແມ່ນເລື່ອງນີ້ ໂສມໜ້າຂອງປະເທດໄທປ່ຽນແປງໄປແນວໃດແລະເປັນ ຫຍັງຈຶ່ງປ່ຽນແປງ.

ທ່ານຄົງຈະຢາກຖາມນັກວິເຄາະນອກລັດຖະບານວ່າ ເປັນຄວາມຈິງບໍ່ ທີ່ໂສມໜ້າຂອງປະເທດກຳລັງປ່ຽນແປງ ໄປ, ມີຄຳອະທິບາຍອື່ນອີກຕື່ມບໍ່ວ່າ ເປັນຫຍັງຈຶ່ງມີເດັກ ນ້ອຍ, ຜູ້ສູງອາຍຸແລະນັກສຶກສາມາຢ້ຽມຢາມປະເທດໄທ ຫລາຍຂຶ້ນ ? ທ່ານອາດຈະຖາມຄົນທີ່ເຮັດວຽກຢູ່ນຳບໍລິ ສັດທ່ອງທ່ຽວເອກະຊົນ, ນັກວິເຄາະການທ່ອງທ່ຽວຕາມ ສະຖາບັນການເງິນແລະບ່ອນອື່ນໆ.

ບາງທີເຂົາເຈົ້າອາດຈະບອກວ່າ ທ່າອ່ຽງບໍ່ດີຕາມທີ່ ບອກຢູ່ໃນໃບແຈ້ງຂ່າວຫລືບອກວ່າໃບແຈ້ງຂ່າວບໍ່ບອກ ຄວາມເປັນຈິງທີ່ສຳຄັນ ຫລືບາງທີອາດຈະເຫັນດີເຫັນ ພ້ອມນຳໃບແຈ້ງຂ່າວແລະເພີ່ມຄວາມຄິດເຫັນທີ່ກ່ຽວຂ້ອງ ບາງປະການໃຫ້. ສິ່ງເຫລົ່ານີ້ຈະເຮັດໃຫ້ຂ່າວຂອງທ່ານ ໜັກແໜ້ນສົມບູນຂຶ້ນຕື່ມ.

ຖ້າຫາກທ່ານໄດ້ຖາມເດັກນ້ອຍ, ຜູ້ສູງອາຍຸແລະນັກ ສຶກສາພວກນີ້ບາງຄົນ ກ່ຽວກັບໂສມໜ້າຂອງປະເທດໄທ

ແລະເຫດຜົນທີ່ມາຢ້ຽມຢາມປະເທດໄທ ທ່ານອາດຈະເລີ່ມຂຽນຂ່າວດ້ວຍເລື່ອງຂອງຄົນແທ້ໆ ແທນທີ່ຈະແມ່ນສະຖິຕິຫລືການວິເຄາະ.

# ບົດທີ 13
# ກອງປະຊຸມ, ຄຳປາໄສ, ກອງປະຊຸມຖະແຫລງຂ່າວ

ສຳນັກຂ່າວຕ່າງໆມັກຈະໄດ້ຂ່າວມາຈາກກອງປະຊຸມ, ຄຳປາໄສແລະກອງປະຊຸມຖະແຫລງຂ່າວ. ໃນທຸກກໍລະນີ ນັກຂ່າວຕ້ອງກຽມຂໍ້ມູນກ່ຽວກັບຜູ້ເວົ້າແລະບັນຫາທີ່ຈະເວົ້າ ຈຶ່ງຈະຕັ້ງຄຳຖາມທີ່ດີໄດ້ແລະຂຽນຂ່າວໃຫ້ຜູ້ອ່ານໄດ້ຊັດເຈນແລະຄົບຖ້ວນສົມບູນ.

## ກອງປະຊຸມ

ຖ້າຫາກອົງການຂອງລັດຫລືກົມກອງທີ່ກຳນົດນະໂຍບາຍມາປະຊຸມກັນ *ໃຫ້ເນັ້ນໃສ່ເລື່ອງທີ່ກຳລັງດຳເນີນຢູ່ແລະຜົນກະທົບຕໍ່ຜູ້ອ່ານ.* ມີການລົງຄະແນນສຽງກັນບໍ່ ? ຄະນະກຳມະການໄດ້ຕົກລົງສະເໜີຂຶ້ນເງິນເດືອນໃຫ້ນາຍຄູບໍ່ ? ຈະຂຶ້ນພາສີຮ້ານຄ້າບໍ່ ? ຈະປັບປຸງງົບປະມານໃໝ່ບໍ່ ? ຖ້າຫາກບໍ່ມີການດຳເນີນການໃດໆ ໃຫ້ເນັ້ນໃສ່ເຫດຜົນວ່າ ເປັນຫຍັງ ? ຫລືໃຫ້ເວົ້າເລື່ອງການຖົກຖຽງບັນຫາກັນ.

ຂ່າວກອງປະຊຸມຄວນປະກອບດ້ວຍ :

- ໃຜມາເຂົ້າຮ່ວມກອງປະຊຸມ
- ຈຸດປະສົງຂອງກອງປະຊຸມ
- ມີການດຳເນີນການເລື່ອງໃດ
- ເປັນຫຍັງຈຶ່ງມີການດຳເນີນການແນວນັ້ນ
- ຄວາມຄິດເຫັນຂອງຜູ້ເຂົ້າຮ່ວມກອງປະຊຸມ/ຜູ້ສັງເກດການ
- ແມ່ນໃຜຈະໄດ້ຮັບຜົນກະທົບຈາກການດຳເນີນ

ການແລະຄວາມຄິດເຫັນຂອງຜູ້ຄົນເຫລົ່ານັ້ນ

- ຖ້າຫາກບໍ່ມີການດຳເນີນການໃດໆ, ມີການຕົກລົງກັນວ່າຈະດຳເນີນການໃດແດ່ບໍ່ ?
- ຖ້າບໍ່ມີການດຳເນີນການໃດໆ ມີຜູ້ເວົ້າອັນໃດສຳຄັນຫລືໜ້າສົນໃຈແດ່ບໍ່ ?
- ເບື້ອງຫລັງຄວາມເປັນມາຂອງບັນຫາ



ວັກນຳຕໍ່ໄປນີ້ເອົາມາຈາກໜັງສືພິມສະບັບພາສາລາວ ບອກໃຫ້ພວກເຮົາຮູ້ວ່າ *ໃຜ* ມາຮ່ວມກອງປະຊຸມແລະບອກຫົວຂໍ້ທົ່ວໄປທີ່ມີການປຶກສາຫາລືກັນ ແຕ່ບໍ່ໄດ້ບອກໃຫ້ພວກເຮົາຮູ້ວ່າ ຜູ້ເຂົ້າຮ່ວມກອງປະຊຸມ *ເວົ້າຫຍັງ* ກ່ຽວກັບຫົວຂໍ້ນັ້ນ. ອັນນີ້ແມ່ນສິ່ງຜິດພາດ ທີ່ມັກເກີດຂຶ້ນຢູ່ສະເໝີກັບບັນດານັກໜັງສືພິມຢູ່ໃນອາຊີຕາເວັນອອກສ່ຽງໃຕ້.

*ຄວາມເປັນຢູ່ທີ່ດີຂອງສັດແມ່ນເລື່ອງທີ່ຄົນສົນໃຈສະເໝີ*

*ພົນເອກ ບົວຊຽງ ຈຳປາພັນ ປະທານອະນຸກຳມະການຝ່າຍລາວແລະພົນໂທ ເສຣີຣັດ ທິນຣັດ ເລຂານຸການແລະອະນຸກຳມະການຝ່າຍໄທ ໄດ້ຮ່ວມຖະແຫລງການກ່ຽວກັບສະພາບຢູ່ວັງເຕົ່າຊຶ່ງເກີດຂຶ້ນເມື່ອວັນທີ 3 ກໍລະກົດ ໃຫ້ແກ່ສື່ມວນຊົນຂອງລາວແລະໄທ ຢູ່ໃນກອງປະຊຸມຄະນະກຳມະການຮັກສາຄວາມປອດໄພຊາຍແດນລາວ -ໄທ.*

ຕໍ່ມາ ຢູ່ໃນຂ່າວພວກເຮົາຮູ້ຕື່ມອີກກ່ຽວກັບສະພາບການວ່າ “ໂຈນມີອາວຸດ” ເຂົ້າມາໂຈມຕີປ້ອມຊາຍແດນແຫ່ງໜຶ່ງ ແລ້ວຈັບພະນັກງານພາສີເປັນຕົວປະກັນ. ທ່ານ

ພັນເອກລາວເວົ້າວ່າ ກອງທັບລາວແລະໄທກຳລັງຮ່ວມມືກັນຮັກສາຄວາມສະຫງົບຢູ່ລຽບຊາຍແດນ. ຂໍ້ມູນດັ່ງກ່າວຄວນຈະຢູ່ໃນວັກນຳ.

ຕໍ່ໄປແມ່ນເນື້ອຫາເຕັມຂອງຂ່າວກອງປະຊຸມອີກຂ່າວໜຶ່ງ ເອົາມາຈາກໜັງສືພິມລາວສະບັບພາສາອັງກິດ:

## *ຍິງສາວສູບຢາຫລາຍຂຶ້ນ*

*ບັນດາໄວລຸ້ນ ໂດຍສະເພາະຍິງສາວທີ່ສູບຢາມີຈຳນວນຫລາຍຂຶ້ນ ດຣ. ສົມຊາຍ ພົນເສນາ ຫົວໜ້າສູນສຶກສາຂໍ້ມູນເພື່ອສຸຂະພາບກ່າວຢູ່ໃນກອງປະຊຸມ ຊຶ່ງຈັດຂຶ້ນພຽງວັນດຽວ ເພື່ອກຳນົດນະໂຍບາຍຂອງຊາດ ກ່ຽວກັບການຄວບຄຸມຢາສູບຢູ່ໃນ ສ. ປ. ປ ລາວ ເມື່ອວັນທີ 24 ກໍລະກົດ ຢູ່ໂຮງແຮມລາວພລາຊາ.*

*ອົງການທີ່ໃຫ້ການສະໜັບສະໜູນ ແມ່ນອົງການພັດທະນາການຊ່ວຍບັນເທົາທຸກອາດຣາ (ADRA) ແລະມີຜູ້ເຂົ້າຮ່ວມກອງປະຊຸມຈຳນວນ 40 ຄົນ ຈາກພະແນກການທີ່ກ່ຽວຂ້ອງຂອງກະຊວງສາທາ, ມີຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນ ໂດຍມີຮອງລັດຖະມົນຕີກະຊວງສາທາເປັນປະທານ.*

*ວາລະກອງປະຊຸມມີການປຶກສາຫາລືກັນ, ລາຍງານສະພາບການທົ່ວໄປ, ການຄວບຄຸມຢາສູບຢູ່ໃນລາວ, ຜົນຮ້າຍຂອງຢາສູບຕໍ່ສຸຂະພາບ, ຂໍ້ມູນການນຳເຂົ້າແລະພາສີຢາສູບ, ຍຸດທະສາດໃນອະນາຄົດແລະນະໂຍບາຍການຄວບຄຸມຢາສູບ.*

*ມີການປູກຢາສູບຢູ່ໃນເນື້ອທີ່ 7.500 ຕາລາງກິໂລແມັດ ໃນຈຳນວນເນື້ອທີ່ທັງໝົດຢູ່ໃນປະເທດ*

*ລາວ. ຢູ່ໃນເຂດຕົວເມືອງ ມີຜູ້ຊາຍສູບຢາ 25 ເປີເຊັນ ແລະແມ່ຍິງ 1,5 ເປີເຊັນ. ສ່ວນຢູ່ເຂດຊົນນະບົດ ມີຜູ້ຊາຍ 60 ເປີເຊັນແລະແມ່ຍິງ 30 ເປີເຊັນທີ່ສູບຢາ ແລະ 70 ຫາ 90 ເປີເຊັນຂອງຜູ້ສູບຢາແມ່ນຊົນຊາດຊົນເຜົ່າ.*

*ລາວມີໂຮງງານຢາສູບຢູ່ສອງບ່ອນ ທີ່ຜະລິດຢາສູບຍີ່ຫໍ້ອາແດງແລະດອກໄມ້ແດງແລະມີສອງບໍລິສັດທີ່ເອົາຢາສູບ 555 ແລະມາກໂບໂຣເຂົ້າມາຈຳໜ່າຍ.*

ວັກນຳບອກຈຸດປະສົງຂອງກອງປະຊຸມ ຄືກຳນົດນະໂຍບາຍຄວບຄຸມການສູບຢາ ແຕ່ຂ່າວບໍ່ໄດ້ບອກຜູ້ອ່ານວ່າ ກອງປະຊຸມປະສົບຜົນສຳເລັດຕາມເປົ້າໝາຍຫລືບໍ່. ຖ້າຫາກມີການກຳນົດນະໂຍບາຍໃໝ່ ມີຫຍັງແດ່ ? ນະໂຍບາຍໃໝ່ໃດໆກໍ່ຈະມີຜົນກະທົບຕໍ່ຄົນຈຳນວນຫລວງຫລາຍ. ຖ້າຫາກວ່າກອງປະຊຸມປະສົບຄວາມລົ້ມເຫລວໃນການກຳນົດນະໂຍບາຍ ເປັນຫຍັງຈຶ່ງລົ້ມເຫລວ ?

ວັກນຳຂຶ້ນຕົ້ນໄດ້ຂ້ອນຂ້າງຖືກຕ້ອງ ຄືເວົ້າເຖິງຂໍ້ຄວາມທີ່ໜ້າສົນໃຈຊຶ່ງມີການເວົ້າກັນຢູ່ໃນກອງປະຊຸມນີ້ ແຕ່ບໍ່ໄດ້ອະທິບາຍສ່ວນທີ່ເຫລືອຂອງຂ່າວ. ເປັນຫຍັງຍິງສາວຈຶ່ງສູບຢາຫລາຍຂຶ້ນ ? ເພີ່ມຂຶ້ນຫລາຍປານໃດ ? ຢູ່ໃນກອງປະຊຸມມີການປຶກສາຫາລືກັນກ່ຽວກັບວິທີທາງຄວບຄຸມແດ່ບໍ່ ?

ຂ່າວນີ້ເວົ້າເຖິງວາລະກອງປະຊຸມ ແຕ່ບໍ່ໄດ້ບອກວ່າຄວາມຄິດຄວາມເຫັນຫລັກໆມີຫຍັງແດ່. ຜູ້ເຂົ້າຮ່ວມກອງປະຊຸມເຫັນດີຫລືບໍ່ເຫັນດີ ກ່ຽວກັບບັນຫາແລະວິທີການຄວບຄຸມ.

ຂ່າວນີ້ໃຫ້ຄວາມເປັນຈິງບາງຢ່າງກ່ຽວກັບເປີເຊັນຂອງ

ຜູ້ສູບຢາແລະຍີ່ຫໍ້ຢາສູບ ແຕ່ຄວາມເປັນມາຫລັກໆຂາດຫາຍໄປ ເຊັ່ນ: ນະໂຍບາຍຄວບຄຸມຢາສູບໃນປັດຈຸບັນມີຫຍັງແດ່ ? ແລະແມ່ນຫຍັງຄືເນື້ອຫາສາລະ ເຊັ່ນ: ເປັນຫຍັງລັດຖະບານຈຶ່ງມາແກ້ບັນຫາໃນເວລານີ້ ?

ບັດນີ້ ລອງມາເບິ່ງຂ່າວກ່ຽວກັບກອງປະຊຸມສຳຄັນທາງການທູດ ຊຶ່ງເປັນຂ່າວທີ່ລາຍງານຍາກແລະມີຄວາມສະລັບຊັບຊ້ອນໃນການຂຽນຫລາຍຂຶ້ນ.

ໃຫ້ສັງເກດວ່າ ຜູ້ຂຽນໃຊ້ຄວາມຮູ້ເບື້ອງຫລັງຂອງຕົນ, ຄວາມຄິດເຫັນຈາກກອງປະຊຸມແລະຄຳສຳພາດຜູ້ເຂົ້າຮ່ວມໃນເວລາທີ່ສຳເລັດກອງປະຊຸມ ເພື່ອໃຫ້ໄດ້ພາບເຫດການເກີດຂຶ້ນຢ່າງຄົບຖ້ວນສົມບູນແລະມີຄວາມໝາຍ.

ນັກຂ່າວອ້າງອີງຄຳເວົ້າຈາກແຫລ່ງຂ່າວເຈັດບ່ອນ ທັງແຫລ່ງຂ່າວທີ່ບອກຊື່ແລະບໍ່ບອກຊື່. ໃນມື້ນັ້ນ ຍັງໄດ້ສຳພາດແຫລ່ງຂ່າວອື່ນອີກຫລາຍບ່ອນ ເພື່ອໃຫ້ຮູ້ວ່າມີຫຍັງເກີດຂຶ້ນແລະເປັນຫຍັງເຫດການນັ້ນຈຶ່ງມີຄວາມສຳຄັນ.

ເນື້ອຂ່າວຂຽນໄດ້ລ່ຽນໄຫລດີແລະການລຽງລຳດັບປະເດັນກໍສົມເຫດສົມຜົນ, ຈາກປະເດັນໜຶ່ງໄປຫາປະເດັນໜຶ່ງ, ຈາກປະເດັນສຳຄັນທີ່ສຸດໄປຫາປະເດັນສຳຄັນໜ້ອຍທີ່ສຸດ. ນັກຂ່າວສັງລວມຂໍ້ມູນທຸກຢ່າງທີ່ກ່ຽວຂ້ອງມາໄວ້ນຳກັນ, ຕອບຄຳຖາມທັງໝົດທີ່ຜູ້ອ່ານອາດຈະຖາມ ໂດຍຈັດລຽງລຳດັບຢ່າງມີເຫດມີຜົນ. ແນ່ນອນແລ້ວເພື່ອຈະຈັດລຽງເນື້ອໃນຂອງບົດຂ່າວໃຫ້ໄດ້ດີ ນັກຂ່າວຕ້ອງອ່ານຫລາຍແລະຕ້ອງຈັບປະເດັນໃຫ້ຖືກຕ້ອງທັງໝົດ.

## *ສະຫະລັດອາເມຣິກາໃຫ້ຄວາມໝັ້ນໃຈແກ່ພັນທະມິດ ໃນການຍຶດໝັ້ນຕໍ່ການຮັກສາຄວາມໝັ້ນຄົງຢູ່ໃນອາຊີແລະປັບປຸງສາຍພົວພັນກັບຈີນໃຫ້ດີຂຶ້ນ*

*ວັກນຳສອງປະໂຫຍກໃຊ້ເພື່ອລາຍງານຄວາມຄືບໜ້າຂອງສອງເລື່ອງ: ເລື່ອງທີ່ກອງປະຊຸມບັນລຸໄດ້ແລະບໍ່ບັນລຸໄດ້ຕາມເປົ້າໝາຍ. ໃຫ້ສັງເກດວ່າການສະແດງຈິດໃຈຂ່າວແມ່ນເຫັນໄດ້ຢ່າງຊັດເຈນ ແລະເຂົ້າໃຈງ່າຍ.*

***ຮ່າໂນ້ຍ***, *ຫວຽດນາມ (ສຳນັກຂ່າວເອພີ) - ວັນພຸດຜ່ານມານີ້ ສະຫະລັດອາເມຣິກາແລະຈີນໃຫ້ຄວາມໝັ້ນໃຈແກ່ບັນດາປະເທດອາຊີແລະເອີຣົບ ໃນການປຶກສາຫາລືກັນເລື່ອງຄວາມໝັ້ນຄົງວ່າ ທັງສອງປະເທດຈະພະຍາຍາມຍຸຕິຄວາມຕຶງຄຽດທີ່ເກີດຂຶ້ນເມື່ອບໍ່ດົນມານີ້ ແຕ່ທີ່ປະຊຸມບໍ່ສາມາດຊັກຊວນໃຫ້ເກົາຫລີເໜືອກັບມາເຈລະຈາຄືນອີກ.*

*ຫຍໍ້ໜ້າເຫລົ່ານີ້ມີຄຳເວົ້າອ້າງອີງສຳຄັນທີ່ສະໜັບສະໜູນສ່ວນທຳອິດຂອງວັກນຳ.*

*ທ່ານ ຖັງ ເຈຍ ຊ້ວນ ລັດຖະມົນຕີຕ່າງປະເທດຂອງຈີນເວົ້າວ່າ ຈີນຕີລາຄາສູງກ່ຽວກັບສາຍພົວພັນກັບສະຫະລັດອາເມຣິກາແລະຈະເຮັດວຽກຮ່ວມກັບວໍຊິງຕັນ ເພື່ອຮັບປະກັນໃຫ້ມີສັນຕິພາບແລະຄວາມໝັ້ນຄົງຢູ່ໃນຂົງເຂດ.*

*"ຫລັງຈາກຜ່ານຜ່າໄລຍະເວລາທີ່ຫຍຸ້ງຍາກສັບສົນ ສາຍພົວພັນຈີນ - ສະຫະລັດອາເມຣິກາ ຊຶ່ງທົ່ວໂລກໃຫ້ຄວາມສົນໃຈກຳລັງກ້າວໄປໃນ*

ທິດທາງດີຂຶ້ນ." ທ່ານ ຖັງ ກ່າວຢູ່ໃນຄຳປາໄສເມື່ອບໍ່ດົນມານີ້ ຢູ່ກອງປະຊຸມອາຊຽນ.

*ຜູ້ອ່ານທີ່ອ່ານດ້ວຍຄວາມຕັ້ງໃຈຈະຖາມທັນທີວ່າ ກອງປະຊຸມອາຊຽນແມ່ນຫຍັງ? ມາຮອດຈຸດນີ້, ຈາກວັກນຳ, ຜູ້ອ່ານຮູ້ພຽງແຕ່ວ່າມີກອງປະຊຸມເລື່ອງຄວາມໝັ້ນຄົງ.*

ກອງປະຊຸມຊຶ່ງໄດ້ຮັບການສະໜັບສະໜູນຈາກ 10 ປະເທດສະມາຊິກສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ຫລືອາຊຽນປະກອບດ້ວຍສະຫະລັດອາເມຣິກາ, ຈີນ, ລັດເຊຍ, ເກົາຫລີໃຕ້, ສະຫະພາບເອີຣົບແລະຊາດອື່ນໆ ສ່ວນເກົາຫລີເໜືອມາເຂົ້າຮ່ວມປະຊຸມໃນຖານະຜູ້ສັງເກດການ.

*ນັກຂ່າວຕອບຄຳຖາມນັ້ນທັນທີ ຊຶ່ງຊ່ວຍສະໜັບສະໜູນວັກນຳອີກ ("ຊາດຕ່າງໆຢູ່ໃນອາຊີແລະເອີຣົບ").*

ນັກການທູດອາຊຽນຜູ້ໜຶ່ງກ່າວວ່າ ທ່ານ ຄໍລິນ ພາວເວລ ລັດຖະມົນຕີຕ່າງປະເທດສະຫະລັດອາເມຣິກາໃຫ້ຄວາມໝັ້ນໃຈແກ່ປະເທດທີ່ມາຮ່ວມກອງປະຊຸມວ່າ ໃນພາບລວມແລ້ວ ສະຫະລັດອາເມຣິກາໃຫ້ຄວາມສຳຄັນເປັນອັນດັບທຳອິດໃນການສ້າງສາຍພົວພັນກັບຈີນແລະກັບອາຊີປາຊີຟິກ.

ທ່ານ ນໍຣະຊິດ ສິງຫະເສນີກ່າວວ່າ ໃນການພົບປະກັບທ່ານ ສຸຣະກຽດ ສະຖຽນໄທ ລັດຖະມົນຕີຕ່າງປະເທດຂອງໄທ ທ່ານ ພາວເວລຢ້ຳວ່າ :

"ສະຫະລັດອາເມຣິກາມີພັນທະຢູ່ໃນຂົງເຂດນີ້ແລະລັດຖະບານສະຫະລັດໃຫ້ຄວາມສົນໃຈຕໍ່ອາຊີເປັນຢ່າງຍິ່ງ."

*ນັກຂ່າວຊຽນປ້ອນຂໍ້ມູນໃຫ້ວັກນຳດ້ວຍການສະເໜີຄວາມຄິດເຫັນຂອງຝ່າຍຈີນ. ບັດນີ້ຈຶ່ງເລີ່ມດ້ວຍຄວາມຄິດເຫັນຂອງອີກຝ່າຍໜຶ່ງ ຄືສະຫະລັດອາເມຣິກາ. ນັກຂ່າວບໍ່ສາມາດສຳພາດທ່ານພາວເວລໄດ້ ແຕ່ໄດ້ຖາມຜູ້ເຂົ້າຮ່ວມປະຊຸມຄົນອື່ນວ່າ ທ່ານ ພາວເວລເວົ້າຫຍັງ.*

*ເບື້ອງຫລັງຄວາມເປັນມາມີຄວາມຈຳເປັນຢ່າງຍິ່ງໃນການເຂົ້າໃຈຂ່າວ, ບອກໃຫ້ຜູ້ອ່ານຮູ້ເຖິງຄວາມສຳຄັນຂອງສາລະທີ່ມີຢູ່ໃນວັກນຳ ຄືສະຫະລັດອາເມຣິກາແລະຈີນພະຍາຍາມປັບປຸງສາຍພົວພັນ. ເບື້ອງຫລັງຄວາມເປັນມາຕ້ອງໃຫ້ງ່າຍແລະສັ້ນ ພໍໃຫ້ເຂົ້າໃຈຂ່າວໄດ້.*

*ຫລາຍເດືອນຜ່ານມານີ້ ສາຍພົວພັນລະຫວ່າງສະຫະລັດອາເມຣິກາແລະຈີນຊຸດໂຊມລົງ ເມື່ອມີການຕັດສິນວ່າ ນັກສຶກສາຈີນຢູ່ໃນສະຫະລັດທຳຜິດດ້ວຍຂໍ້ຫາເປັນນັກສືບ, ຄວາມຂັດແຍ່ງເລື່ອງເຮືອບິນໂຈລະກຳຂອງສະຫະລັດ,*

*ຂໍ້ສະເໜີເລື່ອງລະບົບປ້ອງກັນຂີປານາວຸດຂອງສະຫະລັດແລະປະເດັນສິດທິມະນຸດ.*

*ສອງຫຍໍ້ໜ້ານີ້ອະທິບາຍເນື້ອຫາແລະຄຳຖາມທີ່ວ່າເປັນຫຍັງເລື່ອງນີ້ຈຶ່ງສຳຄັນ - ການປັບປຸງສາຍພົວພັນລະຫວ່າງສະຫະລັດອາເມຣິກາແລະຈີນມີຄວາມໝາຍຕໍ່ອາຊີຕາເວັນອອກສ່ຽງໃຕ້.*

*ເມື່ອມີຄົນຖາມກ່ຽວກັບຈຸດຢືນຂອງປະເທດກຸ່ມອາຊຽນ ທ່ານ ນໍຣະຊິດເວົ້າວ່າ : "ພວກເຮົາຢາກເຫັນສະຫະລັດອາເມຣິກາແລະຈີນຟື້ນຟູການປຶກສາຫາລືທາງການທູດເປັນປົກກະຕິຄືນໃໝ່ ອັນນັ້ນແມ່ນທິດທາງທີ່ກຳລັງຈະເກີດຂຶ້ນ ແລະພວກເຮົາມີຄວາມຍິນດີທີ່ເຫັນການພັດທະນາແບບນີ້ເກີດຂຶ້ນ."*

*ທັງຈີນແລະສະຫະລັດມີບົດບາດສຳຄັນທາງດ້ານເສດຖະກິດແລະຄວາມໝັ້ນຄົງຢູ່ໃນອາຊີຕາເວັນອອກສ່ຽງໃຕ້ ຊຶ່ງມີປະຊາກອນຫລາຍກວ່າຫ້າຮ້ອຍລ້ານຄົນແລະຍັງມີເສັ້ນທາງທະເລທີ່ສຳຄັນທີ່ສຸດແຫ່ງໜຶ່ງຂອງໂລກ.*

*ເທື່ອນີ້ແມ່ນເທື່ອທີສອງທີ່ເກົາຫລີເໜືອເຂົ້າຮ່ວມການປຶກສາຫາລືກ່ຽວກັບຄວາມໝັ້ນຄົງ ຊຶ່ງອາຊຽນເປັນຜູ້ຈັດຂຶ້ນ ແຕ່ເທື່ອນີ້ ທ່ານ ແປັກ ນຳ ຊຸນ ລັດຖະມົນຕີຕ່າງປະເທດບໍ່ໄດ້ມາ ແລະໄດ້ສົ່ງທ່ານ ເຮີ ຈອງ ເຈົ້າໜ້າທີ່ລະດັບຮອງມາແທນ, ສະນັ້ນ ຈຶ່ງບໍ່ມີການພົບປະກັນລະຫວ່າງສະຫະລັດອາເມຣິກາແລະເກົາຫລີເໜືອ ໃນການປຶກສາຫາລືກັນປີນີ້.*

*ບັດນີ້ຜູ້ຂຽນແນະນຳສ່ວນທີ່ສອງຂອງວັກນຳ.*

*ທ່ານ ເຮີ ທຳລາຍຄວາມຫວັງທີ່ຈະໃຫ້ເກົາຫລີເໜືອໄດ້ກັບຄືນມາປຶກສາຫາລືກັນອີກກັບສະຫະລັດອາເມຣິກາແລະເກົາຫລີໃຕ້.*

*ທ່ານ ໂຣດອລໂຟ ເຊເວຣິໂນ ເລຂາທິການອາຊຽນກ່າວ ເມື່ອເລົ່າເຖິງການຕັ້ງຂໍ້ສັງເກດຂອງທ່ານ ເຮີ ໃນການປຶກສາຫາລືເລື່ອງຄວາມໝັ້ນຄົງວ່າ : "ເກົາຫລີເໜືອຍັງເຊື່ອວ່າ ສະຫະລັດຈະກຳນົດເງື່ອນໄຂສຳລັບການກັບມາເຈລະຈາກັນຄືນໃໝ່"*

*ສອງຫຍໍ້ໜ້ານີ້ແມ່ນອະທິບາຍວັກນຳໂດຍກົງ.*

*ທ່ານ ເຊເວຣິໂນກ່າວວ່າ : "ສະຫະລັດອາເມຣິກາບອກວ່າ ຕົນບໍ່ໄດ້ກຳນົດເງື່ອນໄຂໃດໆ ພວກເຂົາມີແຕ່ຈະລໍຖ້າໃຫ້ເກົາຫລີເໜືອຕອບຮັບຂໍ້ສະເໜີເພື່ອເຈລະຈາກັນທີ່ນັ້ນ."*

*ນັກຂ່າວທີ່ດີນັກຈະຊອກເອົາຄວາມຄິດເຫັນທັງສອງດ້ານມາໃສ່ຂ່າວ. ນັກຂ່າວໄດ້ຄວາມຄິດເຫັນນີ້ດ້ວຍການຕັ້ງຄຳຖາມວ່າ ສະຫະລັດອາເມຣິກາຕອບຂໍ້ກ່າວຫາຂອງເກົາຫລີເໜືອແນວໃດ ?*

*ທ່ານ ເຊເວຣິໂນເວົ້າວ່າ ເກົາຫລີເໜືອ*

ອະທິບາຍວັກນຳຕື່ມອີກ

ຍັງບໍ່ມີປະຕິກິລິຍາໃດໆຫລັງຈາກທີ່ປະເທດອື່ນໆຢູ່ ໃນກອງປະຊຸມສະແດງຄວາມຫວັງວ່າ ຈະມີການເຈລະຈາກັນຄືນໃໝ່ລະຫວ່າງເກົາຫລີເໜືອ ແລະເກົາຫລີໃຕ້.

ເຈົ້າໜ້າທີ່ເກົາຫລີໃຕ້ຄົນໜຶ່ງທີ່ບໍ່ປະສົງອອກຊື່ເວົ້າວ່າ ຄວາມຈິງແລ້ວ "ເກົາຫລີເໜືອເບິ່ງການເຈລະຈາໃນແງ່ລົບ."

ແມ່ນແຕ່ທ່ານ ຖັງ ລັດຖະມົນຕີຕ່າງປະເທດຈີນກໍ່ກ່າວວ່າ ທ່ານຈະ "ຍິນດີເປັນຢ່າງຍິ່ງຖ້າມີຄວາມຄືບໜ້າ" ໃນເລື່ອງສາຍພົວພັນຂອງເກົາຫລີເໜືອກັບຊາດອື່ນໆ.

ເບື້ອງຫລັງຄວາມເປັນມາເພີ່ມຂຶ້ນ ຊ່ວຍໃຫ້ຜູ້ອ່ານເຂົ້າໃຈຂ່າວ. ການເຈລະຈາເຄີຍປະສົບຜົນສຳເລັດມາກ່ອນແລ້ວກ່ຽວກັບບັນຫາເກົາຫລີ ແຕ່ບໍ່ແມ່ນເທື່ອນີ້. ບັດນີ້ຂ່າວຫລັກຄົບຖ້ວນສົມບູນແລ້ວ.

ການທີ່ເກົາຫລີເໜືອມາເຂົ້າຮ່ວມເຈລະຈາກ່ຽວກັບຄວາມໝັ້ນຄົງປີກາຍນີ້ ເປັນຫົນທາງທີ່ນຳໄປສູ່ການເປີດສາຍພົວພັນກັບສະຫະລັດອາເມຣິກາແລະເກົາຫລີໃຕ້ ທັງເປັນໂອກາດທີ່ຫາໄດ້ຍາກ ໃນການເປີດປະຕູສູ່ໂລກພາຍນອກຂອງປະເທດຄອມມູນິດທີ່ສູ້ຣົບກັບເກົາຫລີໃຕ້ ໃນຊຸມປີ 1950.

ການເຈລະຈາກ່ຽວກັບບັນຫາຄວາມໝັ້ນຄົງຢູ່ໃນອາຊີ ແມ່ນອີກບັນຫາໜຶ່ງທີ່ມີຄວາມຄືບໜ້າພຽງເລັກນ້ອຍ ເຊັ່ນດຽວກັບຄວາມຂັດແຍ່ງ

ເລື່ອງເກາະຕ່າງໆ ໃນທະເລຈີນໃຕ້, ການຍາດແຍ່ງສິດທິອ້າງເອົາດິນແດນດັ່ງກ່າວລະຫວ່າງຈີນແລະຫລາຍປະເທດອາຊຽນ ຊຶ່ງກໍ່ໃຫ້ເກີດການປະທະກັນດ້ວຍອາວຸດໃນຫລາຍປີຜ່ານມາ.

ຜູ້ຂຽນເວົ້າຕໍ່ເຖິງຄວາມຄືບໜ້າທີ່ສຳຄັນຮອງລົງມາຂອງກອງປະຊຸມ. ອະນຸປະໂຫຍກທີ່ວ່າ : "ອີກບັນຫາໜຶ່ງທີ່ມີຄວາມຄືບໜ້າພຽງເລັກນ້ອຍເຊັ່ນດຽວກັນ ..." ຊ່ວຍໃຫ້ຂ່າວປ່ຽນໄປສູ່ອີກເລື່ອງໜຶ່ງໄດ້ຢ່າງນີ້ມນວນ. ເບື້ອງຫລັງຄວາມເປັນມາແລະຄວາມສຳຄັນສະແດງອອກຢ່າງຊັດເຈນແລະງ່າຍດາຍ.

ທ່ານ ຫງຽນ ດີ ນຽນ ລັດຖະມົນຕີຕ່າງປະເທດຫວຽດນາມ ປະທານການເຈລະຈາຄວາມໝັ້ນຄົງກ່າວວ່າ ປະເທດເຫລົ່ານີ້ກຳລັງເຈລະຈາກັນກ່ຽວກັບ "ກົດແຫ່ງການປະຕິບັດ" ເພື່ອຫລີກລ່ຽງການປະທະກັນອີກ ແຕ່ວ່າຍັງຕົກລົງກັນບໍ່ໄດ້ກ່ຽວກັບປະເດັນຕ່າງໆ ລວມທັງເຂດພູມສັນຖານ ທີ່ຈະລວມຢູ່ໃນກົດນັ້ນ.

ມີການລາຍງານຄວາມຄືບໜ້າຂອງບັນຫາໃນມື້ນັ້ນ, ເປັນຫຍັງຈຶ່ງບໍ່ຄືບໜ້າແລະວິທີທາງແກ້ໄຂທີ່ເປັນໄປໄດ້

ທ່ານກ່າວວ່າ ປັດຈຸບັນປະເທດຕ່າງໆກຳລັງພິຈາລະນາຂໍ້ສະເໜີຂອງປະເທດຟີລິບປິນເພື່ອແກ້ໄຂການບໍ່ລົງລອຍກັນດັ່ງກ່າວ.

ທ່ານ ລຸຍສ໌ ມີເຊລ ລັດຖະມົນຕີຕ່າງປະເທດເບລຊິກ ຕາງໜ້າສະຫະພາບເອີຣົບເວົ້າວ່າ ໃນລະຫວ່າງການປຶກສາຫາລືກັນ ປະເທດຕ່າງໆລວມທັງສະຫະພາບເອີຣົບໄດ້ຄັດຄ້ານແຜນການຂອງສະຫະລັດອາເມຣິກາ ເລື່ອງລະບົບຂີປານາວຸດ.

ທ່ານ ມີເຊລບອກນັກຂ່າວວ່າ : "ພວກເຮົາຕ້ອງປຶກສາຫາລືກັບຝ່າຍອາ

*ຜູ້ຂຽນຂຽນຕໍ່ໄປເຖິງຫົວເລື່ອງຮອງລົງມາອີກອັນໜຶ່ງ ຊຶ່ງມີຄວາມສຳຄັນໜ້ອຍກວ່າຄວາມຂັດແຍ່ງຢູ່ໃນທະເລຈີນໃຕ້ ເພາະວ່າມີລາຍງານກ່ຽວກັບການຄັດຄ້ານແຜນການຂີປານາວຸດຂອງສະຫະລັດອາເມຣິກາມາກ່ອນແລ້ວຢູ່ໃນສື່ຕ່າງໆ.*

*ເມຣິກາກ່ຽວກັບລະບົບຂີປານາວຸດເພາະວ່າບັນຫານີ້ອາດຈະສົ່ງຜົນຮ້າຍຕໍ່ຂະບວນການປອດອາວຸດ.”*

*ຢູ່ໃນຄຳປາໄສ ທ່ານຖັງເຕືອນວ່າລະບົບປ້ອງກັນຂີປານາວຸດຈະສົ່ງຜົນຮ້າຍຕໍ່ສັນຕິພາບແລະຄວາມໝັ້ນຄົງຂອງຂົງເຂດ ຈະ “ບໍ່ກໍ່ໃຫ້ເກີດຜົນດີຕໍ່ຄວາມໄວ້ເນື້ອເຊື່ອໃຈແລະການຮ່ວມມືກັນລະຫວ່າງປະເທດ.”*

## ກອງປະຊຸມສຳມະນາ

ກອງປະຊຸມສຳມະນາແມ່ນເລື່ອງຍາກທີ່ເອົາມາຂຽນເປັນຂ່າວ. ກອງປະຊຸມມັກຈັດຂຶ້ນໂດຍນັກວິຊາການ, ອົງການທີ່ບໍ່ຂຶ້ນກັບລັດຖະບານ, ກຸ່ມອາຊີບແລະລັດຖະບານເພື່ອແລກປ່ຽນຄວາມຄິດແລະມີການປະຕິບັດຕົວຈິງໜ້ອຍດຽວຫລືບໍ່ມີເລີຍ.

ຖ້າຫາກວ່າຢູ່ໃນກອງປະຊຸມມີວິທະຍາກອນຫລັກ, ຄວາມຄິດເຫັນຂອງບຸກຄົນເຫລົ່ານີ້ສາມາດເອົາມາຂຽນເປັນຂ່າວໄດ້. ຖ້າຜູ້ເຂົ້າຮ່ວມຫລາຍຄົນສະເໜີວິທີທາງແກ້ໄຂບັນຫາ ກໍ່ອາດເອົາມາຂຽນເປັນຂ່າວໄດ້ເຊັ່ນກັນ. ໃຫ້ໂອ້ລົມກັບຜູ້ເຂົ້າຮ່ວມກອງປະຊຸມໃນເວລາພັກຜ່ອນ ເພື່ອຊ່ວຍຂະຫຍາຍຄວາມຄິດຕ່າງໆແລະໃຫ້ຖາມວ່າຄວນຈະຈັດການກັບບັນຫານັ້ນແນວໃດ.

ກອງປະຊຸມອາດຈະບໍ່ຊ່ວຍໃຫ້ໄດ້ຂ່າວດີສະເໝີໄປ ແຕ່ເປັນສະຖານທີ່ດີໃນການພົບປະກັບຜູ້ຊ່ຽວຊານແລະສົນທະນາກັນເລື່ອງຄວາມຄິດຕ່າງໆຊຶ່ງອາດຈະເປັນຂ່າວໄດ້.

ເຊັ່ນດຽວກັບການເຮັດຂ່າວກ່ຽວກັບກອງປະຊຸມຕ່າງໆ

ທ່ານຄວນຫລີກລ່ຽງວັກນຳທີ່ບອກແຕ່ລາຍຊື່ຄົນ, ສະຖານທີ່ແລະເວລາຈັດກອງປະຊຸມ ເຊັ່ນ: ຢູ່ໃນຂ່າວຈາກໜັງສືພິມພາສາຫວຽດນາມສະບັບໜຶ່ງ:

> *ກອງປະຊຸມເພື່ອທົບທວນຂະບວນການເຄື່ອນໄຫວໄລຍະສອງປີ (1999 - 2000)ໃນການຕໍ່ຕ້ານຢາເສບຕິດແລະສິ່ງຫຍໍ້ທໍ້ຢູ່ໃນສັງຄົມຊຶ່ງຈັດຂຶ້ນໂດຍສະຫະພັນກຳມະບານຫວຽດນາມ VN-(LDLDVN) ໄດ້ສິ້ນສຸດລົງແລ້ວ ໃນວັນທີ 20 ມີນາ, ຢູ່ເມືອງກວາງ ຕຣີ.*

ຕໍ່ມາຂ່າວຍົກເອົາຄຳເວົ້າຂອງພະນັກງານຂັ້ນນຳທີ່ເວົ້າວ່າ ການໃຊ້ຢາເສບຕິດໃນທາງທີ່ຜິດ ແລະ "ສິ່ງຫຍໍ້ທໍ້ຢູ່ໃນສັງຄົມ" ບໍ່ໄດ້ຫລຸດຜ່ອນລົງ ເພາະວ່າສະມາຊິກຂອງສະຫະພັນບໍ່ເຫັນດີໃນການຮີບຟ້າວຈັດການກັບເລື່ອງພວກນີ້. ທ່ານໄດ້ສະເໜີວິທີທາງແກ້ໄຂບັນຫານີ້. ຄວາມຄິດເຫລົ່ານີ້ຄວນຍົກຂຶ້ນຢູ່ໃນວັກນຳ.



*ບໍ່ໃຫ້ຢ້ານທີ່ຈະຖາມຜູ້ກ່າວຄຳປາໄສ*

## ຄຳປາໄສແລະກອງປະຊຸມຖະແຫລງຂ່າວ

### ຈົ່ງຊອກຫາຄວາມສົມດູນ

ຈົ່ງຈື່ຈຳໄວ້ວ່າ ໂຄສົກມັກຈະມີຈຸດປະສົງສະເພາະໄວ້ແລ້ວ ສຳລັບຖະແຫລງການແລະກອງປະຊຸມແຕ່ລະຄັ້ງ. ໂຄສົກມີສານທີ່ຕ້ອງການໃຫ້ສື່ມວນຊົນນຳໄປເຜີຍແຜ່.

ເຂົາອາດຈະສະໜັບສະໜູນພັກການເມືອງຫລືຜະລິດຕະພັນຂອງຕົນ ແຕ່ກໍ່ບໍ່ເປັນຫຍັງ ນັກຂ່າວທີ່ດີຕ້ອງຮູ້ວ່າ ຕົນກຳລັງໄດ້ຂ່າວຂ້າງດຽວ ແລະທ່ານຕ້ອງພ້ອມທີ່ຈະຖາມຄຳຖາມດີໆ ເພື່ອຫາຂໍ້ມູນເພີ່ມເຕີມຫລາຍຂຶ້ນແລະຖາມຄວາມຄິດເຫັນຂອງຜູ້ເວົ້າ. ຄຳຕອບຂອງໂຄສົກຕໍ່ຄຳຖາມຂອງນັກຂ່າວນັ້ນມັກເອົາມາເປັນປະເດັນຂອງເລື່ອງໄດ້ ໂດຍບໍ່ຕ້ອງໃຊ້ຄຳເວົ້າທີ່ໂຄສົກກະກຽມໄວ້ລ່ວງໜ້າ.

ຖ້າຫາກໂຄສົກສະແດງຄວາມຄິດເຫັນທີ່ຂັດແຍ່ງກັບຄຳຖາມຂອງທ່ານ, ທ່ານຕ້ອງຊອກເອົາຄວາມຄິດເຫັນຂອງຝ່າຍຕົງກັນຂ້າມມາຂຽນໃສ່ໃນຂ່າວ ຫລືຄວາມຄິດເຫັນຈາກຜູ້ຊ່ຽວຊານ ຫລືຜູ້ຟັງທີ່ບໍ່ເຫັນດີເຫັນພ້ອມກັບປະເດັນທີ່ໂຄສົກຖະແຫລງ. ອັນນີ້ແມ່ນການຂຽນຂ່າວໃຫ້ມີຄວາມສົມດູນ.

## ເນັ້ນໃສ່ວ່າ ໃຜເວົ້າຫຍັງ

ຂ່າວກ່ຽວກັບຄຳປາໄສແລະກອງປະຊຸມຖະແຫລງຂ່າວຄວນປະກອບດ້ວຍສິ່ງຕໍ່ໄປນີ້:

- ໃຜເວົ້າ (ຊື່, ຕຳແໜ່ງແລະອົງການ)
- ໂຄສົກເວົ້າຫຍັງ (ປະເດັນຫລັກ) ລວມທັງຄຳເວົ້າອ້າງອິງທີ່ດີ.
- ການກ່າວຄຳປາໄສແລະກອງປະຊຸມຖະແຫລງຂ່າວນັ້ນຈັດຂຶ້ນຢູ່ໃສແລະຍາມໃດ
- ຜູ້ຟັງແມ່ນໃຜແລະມີປະຕິກິລິຍາແນວໃດ
- ຄວາມຄິດເຫັນ/ປະຕິກິລິຍາຈາກຜູ້ອື່ນທີ່ກ່ຽວຂ້ອງກັບປະເດັນນັ້ນ

ວັກນຳຄວນເນັ້ນໃສ່ສອງລາຍການທຳອິດຄື : *ໃຜເວົ້າຫຍັງ ?*

ມີຫລາຍເທື່ອທີ່ວັກນຳຂອງບົດຂ່າວກ່ຽວກັບຄຳປາໄສ ແລະກອງປະຊຸມຖະແຫລງຂ່າວມັກຈະເວົ້າເຖິງໂຄສົກວ່າ ເວົ້າຍາມໃດ, ຢູ່ໃສແລະເວົ້ານຳໃຜ, ແຕ່ບໍ່ກ່າວເຖິງປະ ເດັນຫລັກໆ. ໃຫ້ຖາມທ່ານເອງວ່າ: ໂຄສົກເວົ້າຫຍັງສຳ ຄັນທີ່ສຸດ, ໜ້າສົນໃຈທີ່ສຸດແລະເປັນເລື່ອງແປກໃໝ່? ຕົວ ຢ່າງ: ໂຄສົກສະເໜີວິທີໃໝ່ໆເພື່ອແກ້ໄຂບັນຫາ ? ເຂົາ ສະແດງຄວາມຄິດເຫັນກ່ຽວກັບປະເດັນທີ່ຂັດແຍ່ງບໍ່ ? ໃຫ້ ເອົາສິ່ງເຫລົ່ານີ້ໃສ່ໃນວັກນຳ.

ທ່ານສາມາດຂຽນກ່ຽວກັບ *ສະຖານທີ່ເວົ້າ* ແລະຂໍ້ມູນ ກ່ຽວກັບຜູ້ຟັງໄວ້ໃນຫຍໍ້ໜ້າທີ່ສອງຫລືສາມ ເພື່ອໃຫ້ວັກ ນຳລຽບງ່າຍແລະຊັດເຈນ.



*ທ່ານອາດຈະບໍ່ຮູ້ວ່າຂ່າວ ເລີ່ມຕົ້ນຫລືຈົບລົງຕອນໃດ*

ໃຫ້ແນ່ໃຈວ່າ ທ່ານເນັ້ນສະເພາະແຕ່ປະເດັນຫລັກ ຢ່າ ເອົາທຸກເລື່ອງທີ່ກ່າວຢູ່ໃນຄຳປາໄສ ແລະໃນກອງປະຊຸມ ຖະແຫລງຂ່າວມາໃສ່ໃນຂ່າວ. ໜ້າທີ່ຂອງທ່ານຄືເລືອກ ປະເດັນທີ່ສຳຄັນຫລືໜ້າສົນໃຈທີ່ສຸດໃຫ້ຜູ້ອ່ານ.

ປະເດັນທີ່ສຳຄັນທີ່ສຸດອາດຈະຢູ່ຕອນທ້າຍຂອງຄຳປາໄສທີ່ຍືດຍາວກໍ່ເປັນໄດ້ ສະນັ້ນຕ້ອງມີສະຕິຢູ່ສະເໝີ. ສົມມຸດວ່າ ນາຍົກລັດຖະມົນຕີມາຮ່ວມພິທີສະຫລອງຜົນສຳເລັດການສຶກສາຂອງໂຮງຮຽນແພດແຫ່ງໜຶ່ງ. 45 ນາທີທຳອິດ ທ່ານເວົ້າກ່ຽວກັບສະພາບການຮັກສາສຸຂະພາບ ຫ້ານາທີສຸດທ້າຍ ເພິ່ນປ່ຽນຫົວຂໍ້ແລະປະກາດວ່າຈະກວາດລ້າງຄົນເຂົ້າເມືອງຜິດກົດໝາຍ. ຄົນເຂົ້າເມືອງຜິດກົດໝາຍທັງໝົດຈະຖືກສົ່ງກັບຄືນປະເທດຂອງຕົນທັນທີ.

ຖ້າທ່ານບໍ່ໄດ້ກ່າວຫຍັງເປັນໜ້າຕື່ນເຕັ້ນກ່ຽວກັບການຮັກສາສຸຂະພາບກໍ່ບໍ່ຄວນຂຽນວັກນຳແບບນີ້ :

> *ມື້ວານນີ້ ນາຍົກລັດຖະມົນຕີໄດ້ເວົ້າເຖິງເລື່ອງການຮັກສາສຸຂະພາບ ໃນເວລາມອບໃບປະກາດເນື່ອງໃນພິທີສະຫລອງຜົນສຳເລັດການສຶກສາເທື່ອທຳອິດຂອງໂຮງຮຽນແພດ.*

## ຄວນຂຽນແບບນີ້ :

> *ນາຍົກລັດຖະມົນຕີປະກາດມື້ວານນີ້ວ່າ ຈະກວາດລ້າງຄົນເຂົ້າເມືອງຜິດກົດໝາຍ.*

ຕໍ່ມາ ຢູ່ໃນວັກທີສອງຂອງຂ່າວ ທ່ານຄວນກ່າວວ່າທ່ານນາຍົກສະແດງຄວາມຄິດເຫັນ ໃນລະຫວ່າງພິທີສະຫລອງຜົນສຳເລັດການສຶກສາຂອງໂຮງຮຽນແລະຂຽນຕໍ່ໄປວ່າ ສ່ວນໃຫຍ່ແລ້ວທ່ານເວົ້າເລື່ອງການຮັກສາສຸຂະພາບ. ຜູ້ສຳເລັດການສຶກສາຄົງຈະບໍ່ຄຽດໃຫ້ທ່ານ ຈົ່ງຈື່ໄວ້ວ່າທ່ານຂຽນຂ່າວໃຫ້ຜູ້ອ່ານ ບໍ່ແມ່ນໃຫ້ນັກຮຽນອ່ານ.

ຜູ້ກ່າວຄຳປາໄສມັກຈະເວົ້າສິ່ງສຳຄັນຢູ່ໃນຄຳປາໄສ

ແຕ່ບໍ່ໄດ້ຂະຫຍາຍຄວາມ, ເມື່ອຈົບຄຳປາໄສແລ້ວ ຂໍໃຫ້ຜູ້ກ່າວຄຳປາໄສອະທິບາຍຕື່ມແລະຍົກຕົວຢ່າງນຳ. ໃຫ້ຂຽນໃສ່ໃນຂ່າວວ່າ ຜູ້ກ່າວຄຳປາໄສສະແດງຄວາມຄິດເຫັນໃນການໃຫ້ສຳພາດແກ່ທ່ານ ຫລັງຈາກກ່າວຄຳປາໄສແລ້ວ, ຖ້າບໍ່ດັ່ງນັ້ນ ຜູ້ອ່ານທີ່ຢູ່ໃນເຫດການອາດຈະສັບສົນແລະເວົ້າວ່າທ່ານລາຍງານຂ່າວຜິດ. ໃຫ້ຖືເປັນກົດເກນເລີຍວ່າ ພະຍາຍາມຫາທາງໂອ້ລົມກັບຜູ້ກ່າວຄຳປາໄສຫລັງຈາກກ່າວຄຳປາໄສແລ້ວ ເພາະທ່ານຈະໄດ້ລາຍລະອຽດແລະໄດ້ຄຳເວົ້າອ້າງອີງທີ່ໜ້າສົນໃຈຫລາຍຂຶ້ນ.

## ຕ້ອງກຽມພ້ອມ

ໃຫ້ພະຍາຍາມຂໍສຳເນົາຄຳປາໄສສຳຄັນຕ່າງໆທີ່ຈັດກຽມໄວ້ກ່ອນ ເພາະຈະຊ່ວຍໃຫ້ທ່ານມີເວລາສຶກສາຄົ້ນຄວ້າແລະກຽມຄຳຖາມທີ່ດີໆໄວ້ ແຕ່ໃຫ້ສົມທຽບກັບຄຳເວົ້າແທ້ຂອງຜູ້ກ່າວຄຳປາໄສ. ຜູ້ກ່າວຄຳປາໄສມັກເວົ້າເລື່ອງທີ່ບໍ່ໄດ້ກຽມໄວ້ຫລືບໍ່ເວົ້າບາງສ່ວນ ແຕ່ເຖິງວ່າທ່ານບໍ່ສາມາດຫາສຳເນົາຄຳປາໄສມາອ່ານກ່ອນກໍ່ຕາມ ທ່ານຄວນອ່ານເລື່ອງທີ່ຜູ້ກ່າວຄຳປາໄສຈະອະພິປາຍດ້ວຍວິທີນີ້ເມື່ອຈົບຄຳປາໄສແລ້ວ ທ່ານກໍ່ຈະຮູ້ວ່າຈະເອົາເລື່ອງຫຍັງມາເຮັດເປັນຂ່າວ.

ມາເບິ່ງຕົວຢ່າງຂ່າວຄຳປາໄສທີ່ດີຂ່າວນີ້

***ກຸງເທບ**, ປະເທດໄທ ( ສຳນັກຂ່າວເອພີ ) - ນາຍົກລັດຖະມົນຕີ ທັກສິນ ຊິນນະວັດ ເປີດເຜີຍນະໂຍບາຍຂອງລັດຖະບານໃໝ່ໃນມື້ວັນຈັນໂດຍໃຫ້ຄຳໝັ້ນສັນຍາຢ່າງ*

ຫລວງຫລາຍ ຊຶ່ງນັກວິຈານເວົ້າວ່າ ຍາກທີ່ຈະປະສົບຜົນສຳເລັດໄດ້.

"ຍາກທີ່ຈະປະສົບຜົນສຳເລັດໄດ້" ໝາຍຄວາມວ່າຍາກເກີນກວ່າຈະທຳຕາມຄຳໝັ້ນສັນຍາໄດ້. ຜູ້ອ່ານຮູ້ທັນທີວ່າ ຂ່າວນີ້ບໍ່ເປັນພຽງແຕ່ການບັນທຶກຄຳປາໄສຂອງນາຍົກລັດຖະມົນຕີ ທັກສິນ. ນັກຂຽນຍັງເອົາຄວາມຄິດເຫັນທີ່ຂັດແຍ່ງກັນໃສ່ໃນວັກນຳອີກ.

ນາຍົກລັດຖະມົນຕີກ່າວໃນພິທີເປີດສະພາສະໄໝສາມັນຄັ້ງທຳອິດວ່າ ລັດຖະບານມີນະໂຍບາຍເລັ່ງໃສ່ການເຮັດໃຫ້ມີວຽກເຮັດງານທຳ, ເພີ່ມລາຍໄດ້ແລະລົບລ້າງໜີ້ທະນາຄານຈຳນວນສອງໝື່ນແປດພັນຫ້າຮ້ອຍລ້ານບາດ.

ນາຍົກລັດຖະມົນຕີທັກສິນ ເສດຖີທຸລະກິດໂທລະຄົມມະນາຄົມຊຶ່ງກາຍມາເປັນນັກການເມືອງເວົ້າວ່າ : "ລັດຖະບານຈະເຮັດທຸກຢ່າງ ຕາມອຳນາດທີ່ມີຢູ່ ເພື່ອເຮັດໃຫ້ເກີດໂອກາດແກ່ຊີວິດໃໝ່ ແລະປະເທດໄທຕ້ອງປ່ຽນແປງໃນທຸກໆດ້ານ."

ຜູ້ຂຽນສະຫລຸບປະເດັນຫລັກຂອງນະໂຍບາຍຢ່າງໄວວາ ຊຶ່ງລາຍງານແບບລວມໆຢູ່ໃນວັກນຳ, ຕາມມາດ້ວຍຄຳເວົ້າອ້າງອີງທີ່ສະຫລຸບຄຳປາໄສຂອງນາຍົກລັດຖະມົນຕີ ທັກສິນແລະເນື້ອໃນທີ່ເພີ່ມຂໍ້ມູນອະທິບາຍວັກນຳ. ໃຫ້ເບິ່ງວ່າວັກນຳບໍ່ໄດ້ແຍກເອົານະໂຍບາຍສະເພາະອອກ ເພາະວ່າບໍ່ແມ່ນນະໂຍບາຍໃໝ່ ແຕ່ແມ່ນຄຳໝັ້ນສັນຍາທີ່ໃຫ້ໄວ້ເວລາຫາສຽງເລືອກຕັ້ງ ທີ່ມີການລາຍງານຂ່າວມາແລ້ວຫລາຍເທື່ອ.

ພັກຮ່ວມລັດຖະບານຊຶ່ງນຳໂດຍພັກໄທຮັກໄທຂອງນາຍົກລັດຖະມົນຕີທັກສິນມີອຳນາດຂຶ້ນມາ ຫລັງຈາກຊະນະການເລືອກຕັ້ງທົ່ວໄປ ໃນວັນທີ 6 ມັງກອນ ໂດຍໄດ້ຮັບຄະແນນສຽງສະໜັບສະໜູນ ເພາະໄດ້ໃຫ້ຄຳໝັ້ນສັນຍາວ່າ ຈະເລື່ອນຊຳລະໜີ້ໃຫ້ແກ່ຊາວນາເປັນເວລາສາມປີ, ຈັດຕັ້ງກອງທຶນຈຳນວນ 23.800 ໂດລາແກ່ 77.000 ບ້ານໃນທົ່ວປະເທດ, ຮັກສາສຸຂະພາບ

ເບື້ອງຫລັງຄວາມເປັນມານີ້ຈຳເປັນຢ່າງຍິ່ງເພື່ອໃຫ້ຜູ້ອ່ານເຂົ້າໃຈຂ່າວ.

*ລາຄາຖືກໃຫ້ແກ່ປະຊາຊົນທີ່ທຸກຍາກ ແລະຈັດຕັ້ງບໍລິສັດຄຸ້ມຄອງຊັບສິນຂອງຊາດ ເພື່ອຈັດການກັບໜີ້ສິນຂອງທະນາຄານ.*

*ແຕ່ນັກວິຈານໄດ້ເຕືອນນະໂຍບາຍເອົາໃຈປະຊາຊົນວ່າ ເປັນນະໂຍບາຍທີ່ແພງເກີນໄປ.*

*ທ່ານ ຊວນ ຫລີກໄພ ຫົວໜ້າພັກຝ່າຍຄ້ານກ່າວ ໃນລະຫວ່າງການອະພິປາຍຂອງນາຍົກລັດຖະມົນຕີ ທັກສິນວ່າ : "ຄວາມຄິດໃໝ່ ທຳໃໝ່ບໍ່ໄດ້ໝາຍຄວາມວ່າແມ່ນຄວາມຄິດຖືກຕ້ອງແລະເຮັດຖືກ."*

*ທ່ານ ຊວນ ເວົ້າວ່າ : "ຂໍໃຫ້ຈື່ໄວ້ວ່າປະເທດໄທບໍ່ໄດ້ຮັ່ງມີຄືທ່ານ."*

*ທ່ານ ຊວນເຕືອນເລື່ອງການຈັດຕັ້ງບໍລິສັດຄຸ້ມຄອງຊັບສິນຂອງຊາດເພື່ອຮັບພາລະໜີ້ສິນຂອງທະນາຄານເອກະຊົນວ່າ ມີແຕ່ຈະຊ່ວຍນັກທຸລະກິດທີ່ຮັ່ງມີແລະເພີ່ມພາລະໃຫ້ແກ່ລັດຖະບານ.*

*ທ່ານ ຊວນເວົ້າວ່າ : "ທ່ານບໍ່ມີສິດທີ່ຈະໃຊ້ເງິນພາສີຂອງປະຊາຊົນມາຊ່ວຍຄົນຮັ່ງມີ."*

*ເສດຖະກິດຂອງໄທຊຶ່ງຄັ້ງໜຶ່ງເຄີຍຮຸ່ງເຮືອງ ຕົກຕ່ຳລົງໃນລະຫວ່າງທີ່ເກີດ*

*ຜູ້ຂຽນກັບຄືນມາຫາສ່ວນທີສອງຂອງວັກນຳ ຄືການວິພາກວິຈານນະໂຍບາຍຂອງນາຍົກທັກສິນ. ຜູ້ຂຽນຍົກເອົາຄຳເວົ້າອ້າງອີງສາມຂໍ້ຄວາມທີ່ໜັກແໜ້ນແລະເລືອກເຟັ້ນມາເປັນຢ່າງດີ.*

*ເບື້ອງຫລັງປະຫວັດເສດຖະກິດຂອງໄທເມື່ອບໍ່ດົນມານີ້ ຊ່ວຍໃຫ້ຜູ້ອ່ານເຂົ້າໃຈຂໍ້ຄວາມຈາກຂໍ້ສັງເກດຂອງທ່ານຊວນ ແລະຂໍ້ຄວາມທີ່ນາຍົກລັດຖະມົນຕີທັກສິນພະຍາຍາມວາງນະໂຍບາຍໃໝ່.*

*ມາຮອດຈຸດນີ້ ຂ່າວຄົບຖ້ວນສົມບູນແລ້ວ. ໜັງສືພິມຕ່າງໆທີ່ມີເນື້ອທີ່ສາມາດພິມຂ່າວທີ່ເຫລືອໄດ້ ຊຶ່ງຈະໃຫ້ລາຍລະອຽດສຳຄັນໜ້ອຍລົງ ກ່ຽວກັບການປະກາດນະໂຍບາຍຂອງນາຍົກລັດຖະມົນຕີທັກສິນແລະເພີ່ມຄຳວິພາກວິຈານຂອງນັກການເມືອງອີກຜູ້ໜຶ່ງໃສ່.*

*ວິກິດການທາງການເງິນຢູ່ອາຊີ ໃນປີ 1997 - 98 ເມື່ອຕ່າງປະເທດຖອນການລົງທຶນ ຊຶ່ງເປັນເສັ້ນເລືອດສຳລັບການຜະລິດແລະການສົ່ງອອກ. ວິກິດການນີ້ຍັງເຜີຍໃຫ້ເຫັນເລື່ອງການເຫັນແກ່ພັກແກ່ພວກແລະການສໍ້ລາດບັງຫລວງທີ່ແຜ່ລະບາດຢູ່ໃນລະບົບການເງິນ ຊຶ່ງດົ້ນຮົນເພື່ອໃຫ້ຟື້ນຕົວໄດ້.*

*ນາຍົກລັດຖະມົນຕີທັກສິນເວົ້າວ່າ : "ວຽກທີ່ເລັ່ງດ່ວນແລະສຳຄັນທີ່ສຸດຂອງລັດຖະບານ ຄືການເລັ່ງແກ້ໄຂບັນຫາເສດຖະກິດໂດຍການປ່ຽນແປງໂຄງຮ່າງເສດຖະກິດ, ການບໍລິຫານ, ສັງຄົມ ແລະການເມືອງທັງໝົດນີ້ຕ້ອງດຳເນີນໄປພ້ອມກັນ.*

*ນອກຈາກຄຳໝັ້ນສັນຍາອື່ນໆທີ່ໃຫ້ໄວ້ ນາຍົກລັດຖະມົນຕີທັກສິນຍັງສັນຍາວ່າ ຈະຈັດຕັ້ງທະນາຄານຂອງບ້ານ ຊຶ່ງຈະໃຫ້ນັກທຸລະກິດຂະໜາດນ້ອຍກູ້ຢືມເງິນ, ພັດທະນາລັດວິສະຫະກິດໂດຍໃຫ້ນັກບໍລິຫານມືອາຊີບມາບໍລິຫານ ໂດຍບໍ່ມີການແຊກແຊງທາງການເມືອງ, ກວາດລ້າງການຄ້າຢາເສບຕິດ ແລະຊຸກຍູ້ໃຫ້ປະຊາຊົນເຂົ້າຮ່ວມແຜນການຂອງລັດຖະບານ ໃນການຕໍ່ຕ້ານການສໍ້ລາດບັງຫລວງ.*

*ນາຍົກລົດຖະມົນຕີທັກສິນຍັງສັນຍາວ່າ ຈະເພີ່ມລະບຽບວິໄນດ້ານການ*

*ເງິນໂດຍໃຊ້ເຕັກໂນໂລຊີທີ່ທັນສະໄໝ ເພື່ອຫລຸດຜ່ອນການໃຊ້ຈ່າຍແລະປັບປຸງລະບົບພາສີ.*

*ໃນວັນອາທິດ ຮອງຫົວໜ້າພັກການເມືອງຮ່ວມລັດຖະບານຂອງນາຍົກລັດຖະມົນຕີທັກສິນໄດ້ຮ່ວມກັນອອກຄວາມຄິດເຫັນວິພາກວິຈານນະໂຍບາຍເອົາໃຈປະຊາຊົນ.*

*ທ່ານ ສະເລີມ ຢູ່ບຳຣຸງ ຮອງຫົວໜ້າພັກຄວາມຫວັງໃໝ່ເວົ້າວ່າ ນາຍົກລັດຖະມົນຕີທັກສິນໃຫ້ຄຳໝັ້ນສັນຍາຕ່າງໆ ກໍ່ເພື່ອຫາສຽງສະໜັບສະໜູນ ແລະເພີ່ມພາລະໜີ້ສິນໃຫ້ແກ່ປະຊາຊົນ. ນະໂຍບາຍທີ່ຈະກຳຈັດໜີ້ສິນຢູ່ຊົນນະບົດນັ້ນບໍ່ແມ່ນເລື່ອງໃໝ່ແລະເປັນເລື່ອງເພີ້ຝັນ.*

ຂ່າວນີ້ຈະມີນ້ຳໜັກຫລາຍຂຶ້ນ, ງ່າຍຂຶ້ນແລະຊັດເຈນຂຶ້ນ ຖ້າຫາກມີການແກ້ໄຂເລັກນ້ອຍ ຕົວຢ່າງ: ວັກນຳອາດຈະຂຽນແນວນີ້:

*ນາຍົກລັດຖະມົນຕີທັກສິນ ຊິນນະວັດ ປະກາດນະໂຍບາຍດ້ານເສດຖະກິດແລະສັງຄົມຂອງລັດຖະບານຊຸດໃໝ່ໃນມື້ວັນຈັນ ໂດຍໃຫ້ຄຳໝັ້ນສັນຍາຫລາຍຢ່າງ ຊຶ່ງບັນດານັກວິຈານເວົ້າວ່າເປັນເລື່ອງຍາກທີ່ຈະເຮັດໃຫ້ປະກົດຜົນເປັນຈິງໄດ້.*

ແນວໃດກໍ່ຕາມ ຂ່າວນີ້ຍັງເປັນແບບຢ່າງທີ່ດີສຳລັບວິທີຄິດກ່ຽວກັບການຂຽນຂ່າວຄຳປາໄສ.

## ຂ່າວກ່ຽວກັບພິທີຕ່າງໆກໍ່ຄືກັນ...

ໃນການຂຽນຂ່າວພິທີຕ່າງໆ ນັກຂ່າວມັກເຮັດຜິດແບບດຽວກັນກັບການຂຽນຂ່າວຄຳປາໄສແລະກອງປະຊຸມຖະແຫລງຂ່າວ. ວັກນຳເນັ້ນໃສ່ຂ້າລັດຖະການອາວຸໂສທີ່ມາຮ່ວມແລະດຳເນີນພິທີ. ແຕ່ວ່າແມ່ນຫຍັງຄືຂ່າວທີ່ແທ້ຈິງ ? ແມ່ນຫຍັງກ່ຽວກັບໂຮງຮຽນໃໝ່ຊຶ່ງຫາກໍ່ທຳພິທີເປີດ ? ພິທີນີ້ໝາຍຄວາມວ່າ ນັກຮຽນໃນບ້ານຈະມີໂອກາດໄປເຂົ້າໂຮງຮຽນເປັນເທື່ອທຳອິດບໍ່ ?



ໃຫ້ຄິດສະເໜີວ່າ : *ເລື່ອງສຳຄັນທີ່ເກີດຂຶ້ນຢູ່ບ່ອນນີ້ແມ່ນຫຍັງທີ່ມີຜົນຕໍ່ປະຊາຊົນ?*

*ອະທິບາຍໃຫ້ເຫັນວ່າ ຕົວເອກໃນເລື່ອງເຂົ້າກັບຂ່າວໄດ້ແນວໃດ?*

ເມື່ອບໍ່ດົນມານີ້ ນັກຮຽນວິຊາໜັງສືພິມກຸ່ມໜຶ່ງຈາກມຽນມາໄດ້ຮັບບັນທຶກສຳຄັນສັ້ນໆ(ສົມມຸດ) ກ່ຽວກັບການເປີດໂຮງຮູບເງົາຢູ່ເມືອງມະລະແໝ່ງ ເມືອງນີ້ຕັ້ງຢູ່ຕາເວັນອອກສ່ຽງໃຕ້ຂອງມຽນມາ. ວັກນຳທີ່ນັກຮຽນຂຽນ ສ່ວນໃຫຍ່ເນັ້ນໃສ່ນາຍທະຫານທີ່ມາຮ່ວມພິທີເປີດ. ວັກນຳໜຶ່ງເວົ້າວ່າ : "ມີການຕັດແຖບຜ້າຢູ່ໜ້າໂຮງຮູບເງົາແລະແຈກຢາຍຂອງທີ່ລະລຶກແກ່ທຸກຄົນທີ່ມາຮ່ວມພິທີ."

ຄວາມຈິງແລ້ວ ສິ່ງທີ່ໜ້າສົນໃຈແລະສຳຄັນຄື ການເປີດໂຮງຮູບເງົາມີຜົນຕໍ່ປະຊາຊົນແນວໃດ :

*ມື້ນີ້ ມີຜູ້ມັກເບິ່ງຮູບເງົາຫລາຍກວ່າ 400 ຄົນ ພາກັນຫລັ່ງໄຫລເຂົ້າໄປໃນໂຮງຮູບເງົາຊຸບເປີສະຕາຣ໌ ຊຶ່ງແມ່ນໂຮງຮູບເງົາທຳອິດທີ່ເປີດຂຶ້ນໃນເມືອງມະລະແໝ່ງນັບຕັ້ງແຕ່ປີ 1971 ເປັນຕົ້ນມາ.*